# ກົດບັດ ສະມາຄົມ ບັນດາປະຊາຊາດອາຊີຕາເວັນອອກສຽງໃຕ້

## ອະລຳພະບົດ

**ພວກເຮົາ, ປະຊາຊົນ** ຂອງບັນດາປະເທດສະມາຊິກແຫ່ງສະມາຄົມອາຊີຕາເວັນອອກສຽງໃຕ້ (ອາຊຽນ), ຕາງໜ້າໂດຍ ປະມຸກລັດ ຫລື ຫົວໜ້າລັດຖະບານແຫ່ງ ບຣູໄນ ດາຣູສະລາມ, ຣາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ອິນໂດເນເຊຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມາເລເຊຍ, ສະຫະພາບ ມຽນມາ, ສາທາລະນະລັດ ຟີລິບປິນ, ສາທາລະນະລັດ ສິງກະໂປ, ຣາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ;

**ໂດຍຮັບຮູ້** ຜົນສຳເລັດອັນສຳຄັນ ແລະ ການຂະຫຍາຍຕົວຂອງ ອາຊຽນ ດ້ວຍຄວາມພາກພູມໃຈ ນັບແຕ່ໄດ້ຮັບການສ້າງຕັ້ງມາ ທີ່ ບາງກອກ ໂດຍຖະແຫລງການບາງກອກ;

**ໂດຍອ້າງເຖິງຄຳຕົກລົງ** ເພື່ອສ້າງກົດບັດອາຊຽນ ຕາມແຜນປະຕິບັດງານວຽງຈັນ, ຖະແຫລງການ ກົວລາລຳເປີ ວ່າດ້ວຍການສ້າງກົດບັດອາຊຽນ ແລະ ຖະແຫລງການເຊບູ ວ່າດ້ວຍແຜນແມ່ບົດ ຂອງກົດບັດອາຊຽນ;

**ໂດຍຮູ້ໄດ້ການດຳລົງຄົງຕົວ** ທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ເພິ່ງພາອາໄສເຊິ່ງກັນແລະ ກັນ ລະຫວ່າງ ປະຊາຊົນ ແລະ ປະເທດສະມາຊິກອາຊຽນ ທີ່ຜູກພັນກັນທາງດ້ານພູມີສາດ, ມີຈຸດປະສົງລວມ ແລະ ຮ່ວມຊາຕາກຳອັນດຽວກັນ;

**ໂດຍໄດ້ຮັບແຮງດົນບັນດານໃຈ** ແລະ ຮ່ວມກັນພາຍໃຕ້ວິໄສທັດອັນດຽວກັນ, ເອກະລັກອັນດຽວ ກັນ ແລະ ປະຊາຄົມອັນດຽວກັນ ທີ່ມີຄວາມຫວ່ງໄຍ ແລະ ເອື້ອເຟື້ອເພື່ອແຜ່ ເຊິ່ງກັນ ແລະກັນ;

**ໂດຍສາມັກຄີປຸ້ມລຸມກັນ** ພາຍໃຕ້ຄວາມມຸ້ງຫວັງ ແລະ ເຈດຕະນາລົມຮ່ວມກັນ ທີ່ຈະດຳລົງຄົງຕົວ ໃນພາກພື້ນແຫ່ງສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບອັນຖາວອນ, ການຂະຫຍາຍ- ຕົວທາງດ້ານເສດຖະກິດແບບຍືນຍົງ, ຄວາມຈະເລີນຮຸ່ງເຮືອງ ແລະ ຄວາມກ້າວໜ້າທາງ ສັງຄົມຮ່ວມກັນ, ແລະ ສິ່ງເສີມຜົນປະໂຫຍດ, ອຸດົມການ ແລະ ຄວາມປາດຖະໜາ ອັນສຳ- ຄັນຍິ່ງຂອງພວກເຮົາ;

**ໂດຍເຄົາລົບ** ຄວາມສຳຄັນພື້ນຖານແຫ່ງໄມຕີຈິດ ແລະ ການຮ່ວມມື ແລະ ບັນດາຫລັກການແຫ່ງ ອະທິປະໄຕ, ຄວາມສະເໝີພາບ, ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງເຂົ້າໃນກິດຈະການ ພາຍໃນ, ເຫັນດີເປັນເອກະສັນ ແລະ ຄວາມເປັນເອກະພາບກັນທ່າມກາງຄວາມຫລາກຫລາຍ;

**ໂດຍຍຶດໝັ້ນ** ໃນຫລັກການປະຊາທິປະໄຕ, ການປົກຄອງດ້ວຍກົດໝາຍ ແລະ ການປົກຄອງທີ່ດີ, ເຄົາລົບ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານ;

**ດ້ວຍຄວາມຕັດສິນໃຈ** ເພື່ອຮັບປະກັນການພັດທະນາແບບຍືນຍົງ ເພື່ອຜົນປະໂຫຍດຂອງປະຊາຊົນລຸ້ນປະຈຸບັນ ແລະ ລຸ້ນຕໍ່ໄປໃນອະນາຄົດ, ແລະ ສ້າງຄວາມຢູ່ດີກິນດີ, ການດຳລົງຊີວິດ ແລະ ສະຫວັດດີການຂອງປະຊາຊົນໃຫ້ເປັນໃຈກາງຂອງຂະບວນການສ້າງປະຊາຄົມອາຊຽນ;

**ໂດຍເຊື່ອໝັ້ນ** ໃນຄວາມຈຳເປັນທີ່ຈະຮັດແໜ້ນຄວາມຜູກພັນແຫ່ງຄວາມສາມັກຄີທີ່ມີຢູ່ໃນພາກພື້ນ ເພື່ອບັນລຸການສ້າງປະຊາຄົມອາຊຽນ ທີ່ມີຄວາມເປັນປຶກແຜ່ນດ້ານການເມືອງ, ເຊື່ອມ-ໂຍງກັນດ້ານເສດຖະກິດ ແລະ ມີຄວາມຮັບຜິດຊອບທາງສັງຄົມ ເພື່ອຕອບສະໜອງຕໍ່ສິ່ງທ້າທາຍ ແລະ ກາລະໂອກາດ ໃນປະຈຸບັນ ແລະ ອະນາຄົດ ໄດ້ຢ່າງມີປະສິດທິພາບ;

**ໂດຍໝາຍໝັ້ນ** ໃນການເລັ່ງລັດການສ້າງປະຊາຄົມ ໂດຍຜ່ານການສົ່ງເສີມການຮ່ວມມື ແລະ ການເຊື່ອມໂຍງຂອງພາກພື້ນ, ໂດຍສະເພາະແມ່ນດ້ວຍການສ້າງປະຊາຄົມອາຊຽນ ທີ່ປະກອບດ້ວຍ ປະຊາຄົມຄວາມໝັ້ນຄົງອາຊຽນ, ປະຊາຄົມເສດຖະກິດອາຊຽນ ແລະ ປະຊາຄົມສັງຄົມ-ວັດທະນະທຳອາຊຽນ ດັ່ງທີ່ໄດ້ລະບຸໄວ້ໃນຖະແຫລງການບາຫລີ ວ່າດ້ວຍຄວາມປອງດອງອາຊຽນ ສະບັບທີ ສອງ;

**ດັ່ງນັ້ນ, ຈິ່ງຕົກລົງ** ສ້າງຂອບທາງດ້ານກົດໝາຍ ແລະ ທາງດ້ານສະຖາບັນຂອງອາຊຽນ ດ້ວຍກົດ-ບັດສະບັບນີ້.

**ແລະ ເພື່ອບັນລຸເປົ້າໝາຍດັ່ງກ່າວນີ້,** ບັນດາປະມຸກລັດ ຫລື ຫົວໜ້າລັດຖະບານຂອງບັນດາປະເທດສະມາຊິກອາຊຽນ ທີ່ໄດ້ມາເຕົ້າໂຮມກັນ ຢູ່ສິງກະໂປ ເນື່ອງໃນໂອກາດທີ່ເປັນປະຫວັດສາດແຫ່ງການສ້າງຕັ້ງອາຊຽນ ຄົບຮອບ 40 ປີ ຈິ່ງໄດ້ຕົກລົງຮັບເອົາກົດບັດສະບັບນີ້.

## ໝວດທີ I
## ເປົ້າໝາຍ ແລະ ຫລັກການ

### ມາດຕາ 1
### ເປົ້າໝາຍ

ເປົ້າໝາຍຂອງອາຊຽນ ແມ່ນ:

1. ເພື່ອຮັກສາ ແລະ ສົ່ງເສີມ ສັນຕິພາບ, ຄວາມໝັ້ນຄົງ ແລະ ສະຖຽນລະພາບ ແລະ ເພື່ອຮັດແໜ້ນຄ່ານິຍົມແຫ່ງການຮັກທອມສັນຕິພາບ ໃນພາກພື້ນ;
2. ເພື່ອເພີ່ມທະວີຄວາມສາມາດໃນການເພິ່ງຕົນເອງຂອງພາກພື້ນ ໂດຍການສົ່ງເສີມການຮ່ວມມືທາງດ້ານການເມືອງ, ຄວາມໝັ້ນຄົງ, ເສດຖະກິດ ແລະ ສັງຄົມ-ວັດທະນະທຳ ໃຫ້ກວ້າງຂວາງ;
3. ເພື່ອຮັກສາໄວ້ໃຫ້ອາຊີຕາເວັນອອກສຽງໃຕ້ເປັນເຂດປອດອາວຸດນິວເຄຼຍ ແລະ ປາ-ສະຈາກ ບັນດາອາວຸດທຳລາຍລ້າງອື່ນໆ;
4. ເພື່ອຮັບປະກັນໃຫ້ປະຊາຊົນ ແລະ ບັນດາປະເທດສະມາຊິກອາຊຽນ ດຳລົງຄົງຕົວໃນທ່າມກາງສັນຕິພາບຮ່ວມກັບທົ່ວໂລກ ໃນສະພາບແວດລ້ອມທີ່ມີຄວາມເປັນທຳ, ມີປະຊາທິປະໄຕ ແລະ ມີຄວາມກົມກຽວກັນ;
5. ເພື່ອສ້າງຕະຫລາດ ແລະ ຖານການຜະລິດໜຶ່ງດຽວ ທີ່ມີສະຖຽນລະພາບ, ມີຄວາມກ້າວໜ້າ, ມີຄວາມສາມາດໃນການແຂ່ງຂັນສູງ ແລະ ເຊື່ອມໂຍງກັນທາງດ້ານເສດ-ຖະກິດ ທີ່ມີການອຳນວຍຄວາມສະດວກແກ່ການຄ້າ ແລະ ການລົງທຶນ ຢ່າງມີປະສິດ-ທິພາບ ໂດຍມີການໄຫລວຽນຢ່າງເສລີຂອງສິນຄ້າ, ການບໍລິການ ແລະ ການລົງທຶນ; ການເຄື່ອນຍ້າຍຂອງບັນດານັກທຸລະກິດ, ຜູ້ຊຳນານງານ, ຜູ້ທີ່ມີພອນສະຫວັນ ແລະ ແຮງງານ ໄດ້ຮັບຄວາມສະດວກ; ແລະ ການໄຫລວຽນຂອງເງິນທຶນເສລີຫລາຍຂຶ້ນ;
6. ເພື່ອບັນເທົາຄວາມທຸກຍາກ ແລະ ຮັດແຄບຄວາມແຕກໂຕນທາງດ້ານການພັດທະນາພາຍໃນອາຊຽນ ໂດຍການຊ່ວຍເຫລືອ ແລະ ຮ່ວມມື ເຊິ່ງກັນ ແລະກັນ;
7. ເພື່ອຮັດແໜ້ນປະຊາທິປະໄຕ, ສົ່ງເສີມການປົກຄອງທີ່ດີ ແລະ ການປົກຄອງດ້ວຍກົດໝາຍ, ແລະ ເພື່ອສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນ-ຖານ ໂດຍສອດຄ່ອງກັບສິດ ແລະ ຄວາມຮັບຜິດຊອບຂອງບັນດາປະເທດສະມາຊິກອາຊຽນ;
8. ເພື່ອຕອບສະໜອງຢ່າງມີປະສິດທິພາບ ຕໍ່ໄພຂົ່ມຂູ່ທຸກຮູບແບບ, ອາຊະຍາກຳຂ້າມຊາດ ແລະ ສິ່ງທ້າທາຍແບບຂ້າມແດນ ໃຫ້ສອດຄ່ອງຕາມຫລັກການຄວາມໝັ້ນຄົງແບບຮອບດ້ານ;

9. ເພື່ອສົ່ງເສີມການພັດທະນາແບບຍືນຍົງ ເພື່ອຮັບປະກັນການປົກປ້ອງສະພາບແວດ-ລ້ອມໃນພາກພື້ນ, ຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາມໍລະດົກທາງດ້ານວັດທະນະທຳ ແລະ ຄຸນນະພາບຊີວິດທີ່ດີຂອງປະຊາຊົນ;

10. ເພື່ອພັດທະນາຊັບພະຍາກອນມະນຸດ ໂດຍການຮ່ວມມືຢ່າງໃກ້ຊິດກວ່າເກົ່າ ທາງດ້ານການສຶກສາ ແລະ ການຮຽນຮູ້ຕະຫລອດຊີວິດ, ແລະ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ເພື່ອເສີມສ້າງພະລັງປະຊາຊົນອາຊຽນ ແລະ ຮັດແໜ້ນປະຊາຄົມອາຊຽນ;

11. ເພື່ອສົ່ງເສີມຄວາມຢູ່ດີກິນດີ ແລະ ການດຳລົງຊີວິດຂອງປະຊາຊົນອາຊຽນ ໂດຍໃຫ້ເຂົາເຈົ້າມີໂອກາດຢ່າງເທົ່າທຽມກັນໃນການເຂົ້າເຖິງການພັດທະນາມະນຸດ, ສະຫວັດ-ດີການສັງຄົມ ແລະ ຄວາມຍຸຕິທຳ;

12. ເພື່ອຮັດແໜ້ນການຮ່ວມມືໃນການສ້າງສະພາບແວດລ້ອມທີ່ປອດໄພ, ໝັ້ນຄົງ ແລະ ປາສະຈາກຢາເສບຕິດ ສຳລັບປະຊາຊົນອາຊຽນ;

13. ເພື່ອສົ່ງເສີມອາຊຽນທີ່ມີປະຊາຊົນເປັນແກນກາງ ເຊິ່ງທຸກຂະແໜງການຂອງສັງຄົມໄດ້ຮັບການສົ່ງເສີມ ໃຫ້ເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດ ຈາກຂະບວນການເຊື່ອມໂຍງ ແລະ ການສ້າງປະຊາຄົມອາຊຽນ;

14. ເພື່ອສົ່ງເສີມເອກະລັກຂອງອາຊຽນໂດຍຜ່ານການຮັດແໜ້ນຄວາມຮັບຮູ້ກ່ຽວກັບວັດທະນະທຳ ແລະ ມໍລະດົກ ອັນຫລາກຫລາຍຂອງພາກພື້ນໃຫ້ຫລາຍຂຶ້ນ; ແລະ

15. ເພື່ອຮັກສາຄວາມເປັນແກນກາງຂອງອາຊຽນ ແລະ ບົດບາດເປັນເຈົ້າການ ໃນຖານະເປັນກຳລັງຂັບເຄື່ອນຕົ້ນຕໍ ໃນການພົວພັນ ແລະ ຮ່ວມມື ລະຫວ່າງອາຊຽນ ກັບບັນດາຄູ່ຮ່ວມນອກພາກພື້ນ ໃນໂຄງສ້າງພາກພື້ນທີ່ເປີດກວ້າງ, ໂປ່ງໃສ ແລະ ກວມລວມ.

## ມາດຕາ 2
## ຫລັກການ

1. ເພື່ອໃຫ້ສອດຄ່ອງກັບເປົ້າໝາຍທີ່ໄດ້ລະບຸໄວ້ໃນມາດຕາ 1 ອາຊຽນ ແລະ ບັນດາປະເທດສະມາຊິກອາຊຽນ ຢືນຢັນຄືນ ແລະ ຍຶດໝັ້ນຕໍ່ບັນດາຫລັກການພື້ນຖານທີ່ກຳນົດໃນບັນດາຖະແຫລງການ, ຂໍ້ຕົກລົງ, ສົນທິສັນຍາ ແລະ ບັນດາເອກະສານອື່ນໆຂອງອາຊຽນ;

2. ອາຊຽນ ແລະ ບັນດາປະເທດສະມາຊິກ ຕ້ອງປະຕິບັດໃຫ້ສອດຄ່ອງຕາມບັນດາຫລັກການດັ່ງຕໍ່ໄປນີ້:
   (ກ) ເຄົາລົບ ເອກະລາດ, ອະທິປະໄຕ, ຄວາມສະເໝີພາບ, ຜືນແຜ່ນດິນອັນຄົບ-ຖ້ວນ ແລະ ເອກະລັກແຫ່ງຊາດ ຂອງທຸກປະເທດສະມາຊິກອາຊຽນ;

(ຂ) ມີພັນທະ ແລະ ຄວາມຮັບຜິດຊອບຮ່ວມກັນ ໃນການສົ່ງເສີມ ສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມວັດທະນາຖາວອນ ຂອງພາກພື້ນ;

(ຄ) ບໍ່ໃຊ້ການຮຸກຮານ ແລະ ການຂົ່ມຂູ່ ຫລື ການໃຊ້ກຳລັງ ຫລື ການກະທຳທຸກຮູບແບບ ທີ່ບໍ່ສອດຄ່ອງກັບກົດໝາຍສາກົນ;

(ງ) ຍຶດໝັ້ນໃນການແກ້ໄຂຂໍ້ຂັດແຍ່ງ ໂດຍສັນຕິວິທີ;

(ຈ) ບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງບັນດາປະເທດສະມາຊິກອາຊຽນ;

(ສ) ເຄົາລົບສິດ ຂອງທຸກປະເທດສະມາຊິກໃນການນຳພາການດຳລົງຄົງຕົວຂອງປະເທດຕົນ ໂດຍປາສະຈາກການແຊກແຊງ, ການໂຄ່ນລົ້ມ ແລະ ການບີບບັງຄັບ ຈາກພາຍນອກ,

(ຊ) ສົ່ງເສີມການປຶກສາຫາລື ກ່ຽວກັບບັນຫາທີ່ສົ່ງຜົນກະທົບຢ່າງຮ້າຍແຮງ ຕໍ່ ຜົນ-ປະໂຫຍດລວມ ຂອງອາຊຽນ;

(ຍ) ຍຶດໝັ້ນຫລັກການປົກຄອງດ້ວຍກົດໝາຍ, ການປົກຄອງທີ່ດີ, ແລະ ຫລັກການປະຊາທິປະໄຕ ແລະ ລັດຖະບານທີ່ຖືກຕ້ອງຕາມລັດຖະທຳມະນູນ;

(ດ) ເຄົາລົບເສລີພາບຂັ້ນພື້ນຖານ, ສົ່ງເສີມ ແລະ ປົກປ້ອງສິດທິມະນຸດ, ແລະ ສົ່ງ-ເສີມຄວາມຍຸຕິທຳໃນສັງຄົມ;

(ຕ) ຍຶດໝັ້ນ ກົດບັດສະຫະປະຊາຊາດ ແລະ ກົດໝາຍສາກົນ, ລວມທັງກົດໝາຍມະນຸດສະທຳສາກົນ ທີ່ບັນດາປະເທດສະມາຊິກເປັນພາຄີ;

(ຖ) ລະເວັ້ນຈາກການມີສ່ວນຮ່ວມໃນການດຳເນີນນະໂຍບາຍ ຫລື ກິດຈະກຳໃດໆ, ລວມທັງການນຳໃຊ້ເຂດແດນຂອງຕົນ ໂດຍປະເທດສະມາຊິກອາຊຽນ ຫລື ປະ-ເທດທີ່ບໍ່ແມ່ນສະມາຊິກອາຊຽນ ຫລື ຜູ້ກະທຳທີ່ບໍ່ແມ່ນປະເທດໃດໜຶ່ງ ທີ່ເປັນໄພຂົ່ມຂູ່ຕໍ່ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ຫລື ສະຖຽນລະພາບທາງດ້ານການເມືອງ ແລະ ເສດຖະກິດ ຂອງບັນດາປະເທດສະມາຊິກອາຊຽນ;

(ທ) ເຄົາລົບວັດທະນະທຳ, ພາສາ ແລະ ສາສະໜາທີ່ແຕກຕ່າງກັນຂອງປະຊາຊົນອາຊຽນ, ໃນຂະນະດຽວກັນ ກໍເນັ້ນຄ່ານິຍົມຮ່ວມກັນ ບົນຈິດໃຈແຫ່ງຄວາມເປັນເອກະພາບທ່າມກາງຄວາມຫລາກຫລາຍ;

(ນ) ຄວາມເປັນແກນກາງຂອງອາຊຽນໃນການພົວພັນ ກັບພາຍນອກ ທາງດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ, ໃນຂະນະດຽວກັນ ກໍຮັກສາໄວ້ຊຶ່ງການມີສ່ວນຮ່ວມຢ່າງຫ້າວຫັນ, ການເບິ່ງໄປຂ້າງໜ້າ, ເປີດກວ້າງ ແລະ ບໍ່ແບ່ງແຍກ; ແລະ

(ບ) ຍຶດໝັ້ນຫລັກການການຄ້າແບບຫລາຍຝ່າຍ ແລະ ລະບົບຂອງອາຊຽນທີ່ຍຶດໝັ້ນໃນຫລັກການ ເພື່ອການຈັດຕັ້ງປະຕິບັດບັນດາພັນທະທາງດ້ານເສດຖະກິດ ຢ່າງມີປະສິດທິຜົນ ແລະ ການຫລຸດຜ່ອນຢ່າງຕໍ່ເນື່ອງ ເພື່ອກ້າວໄປ

ສູ່ການຍົກເລີກ ທຸກສິ່ງກີດຂວາງຕໍ່ການເຊື່ອມໂຍງເສດຖະກິດພາກພື້ນ ຕາມລະບົບເສດຖະກິດ ຕະຫລາດ.

## ໝວດທີ II
## ຖານະນິຕິບຸກຄົນ

### ມາດຕາ 3
### ຖານະນິຕິບຸກຄົນຂອງອາຊຽນ

ອາຊຽນ ໃນຖານະເປັນອົງການຈັດຕັ້ງລະຫວ່າງລັດຖະບານ ໄດ້ຮັບຖານະນິຕິບຸກຄົນ ໂດຍກົດບັດສະບັບນີ້.

## ໝວດທີ III
## ການເປັນສະມາຊິກ

### ມາດຕາ 4
### ບັນດາປະເທດສະມາຊິກ

ບັນດາປະເທດສະມາຊິກອາຊຽນປະກອບມີ: ບຣູໄນ ດາຣູສະລາມ, ຣາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ອິນໂດເນເຊຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມາເລເຊຍ, ສະຫະພາບ ມຽນມາ, ສາທາລະນະລັດ ຟີລິບປິນ, ສາທາລະນະລັດ ສິງກະໂປ, ຣາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

### ມາດຕາ 5
### ສິດ ແລະ ພັນທະ

1. ບັນດາປະເທດສະມາຊິກຈະມີສິດ ແລະ ພັນທະເທົ່າທຽມກັນ ພາຍໃຕ້ກົດບັດ ສະບັບນີ້.
2. ບັນດາປະເທດສະມາຊິກຈະຕ້ອງໃຊ້ທຸກມາດຕະການທີ່ຈຳເປັນ ລວມທັງ ການອອກກົດໝາຍພາຍໃນທີ່ເໝາະສົມ ເພື່ອຈັດຕັ້ງປະຕິບັດ ບັນດາຂໍ້ກຳນົດຂອງກົດບັດສະບັບນີ້ ແລະ ປະຕິບັດທຸກພັນທະຂອງການເປັນສະມາຊິກ ຢ່າງມີປະສິດທິຜົນ.

3. ໃນກໍລະນີ ທີ່ມີການລະເມີດກົດບັດອາຊຽນຢ່າງຮ້າຍແຮງ ຫລື ການບໍ່ປະຕິບັດຕາມ, ບັນຫານີ້ຈະຕ້ອງອີງໃສ່ ມາດຕາ 20.

## ມາດຕາ 6
## ການຮັບເອົາສະມາຊິກໃຫມ່

1. ຂັ້ນຕອນການສະຫມັກ ແລະ ການຮັບເອົາປະເທດສະມາຊິກອາຊຽນ ຈະຖືກກໍານົດໂດຍ ສະພາປະສານງານອາຊຽນ.
2. ການຮັບເອົາສະມາຊິກໃຫມ່ຈະຕ້ອງອີງໃສ່ເງື່ອນໄຂລຸ່ມນີ້:
   (ກ) ທີ່ຕັ້ງທາງພູມສາດຕ້ອງໄດ້ຮັບການຍອມຮັບວ່າຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້;
   (ຂ) ຮັບຮູ້ໂດຍທຸກປະເທດສະມາຊິກອາຊຽນ;
   (ຄ) ຄໍາຕົກລົງທີ່ຈະຜູກພັນ ແລະ ຍຶດຫມັ້ນໃນກົດບັດອາຊຽນ; ແລະ
   (ງ) ມີຄວາມສາມາດ ແລະ ຄວາມພ້ອມ ທີ່ຈະປະຕິບັດພັນທະຂອງການເປັນສະມາຊິກ.
3. ການຮັບເອົາສະມາຊິກໃຫມ່ຈະຕ້ອງໄດ້ຮັບການເຫັນດີຢ່າງເປັນເອກະສັນ ໂດຍກອງ-ປະຊຸມສຸດຍອດອາຊຽນ ຕາມການສະເຫນີຂອງສະພາປະສານງານອາຊຽນ.
4. ປະເທດສະຫມັກຈະຖືກຮັບເຂົ້າເປັນສະມາຊິກອາຊຽນ ພາຍຫລັງທີ່ໄດ້ລົງນາມ ໃນເອກະສານການເຂົ້າເປັນພາຄີຂອງກົດບັດສະບັບນີ້.

# ຫມວດທີ IV
# ບັນດາອົງກອນ

## ມາດຕາ 7
## ກອງປະຊຸມສຸດຍອດອາຊຽນ

1. ກອງປະຊຸມສຸດຍອດອາຊຽນ ຈະຕ້ອງປະກອບດ້ວຍ ປະມຸກລັດ ຫລື ຫົວຫນ້າລັດ-ຖະບານ ຂອງ ບັນດາປະເທດສະມາຊິກ.
2. ກອງປະຊຸມສຸດຍອດອາຊຽນ ຈະຕ້ອງ:
   (ກ) ເປັນອົງກອນສູງສຸດໃນການກໍານົດນະໂຍບາຍຂອງອາຊຽນ;
   (ຂ) ປຶກສາຫາລື, ໃຫ້ທິດຊີ້ນໍາທາງດ້ານນະໂຍບາຍ ແລະ ກໍານົດຄໍາຕົກລົງໃນບັນຫາສໍາຄັນໆກ່ຽວກັບການບັນລຸບັນດາເປົ້າຫມາຍຂອງອາຊຽນ, ບັນຫາ

ສຳຄັນກ່ຽວກັບຜົນປະໂຫຍດ ຂອງ ບັນດາປະເທດສະມາຊິກ ແລະ ທຸກໆບັນຫາ ທີ່ສະເຫນີຂຶ້ນມາໂດຍສະພາປະສານງານອາຊຽນ ແລະ ບັນດາສະພາປະຊາຄົມ ອາຊຽນ ແລະ ບັນດາອົງກອນລັດຖະມົນຕີຂະແຫນງການຕ່າງໆຂອງອາຊຽນ;

(ຄ) ແນະນຳໃຫ້ບັນດາລັດຖະມົນຕີທີ່ກ່ຽວຂ້ອງໃນແຕ່ລະສະພາຈັດກອງປະຊຸມ ສະເພາະກິດ ໃນລະດັບລັດຖະມົນຕີ, ແລະ ແກ້ໄຂບັນຫາສຳຄັນຕ່າງໆຂອງ ອາຊຽນ ທີ່ທັບຊ້ອນກັນລະຫວ່າງບັນດາສະພາປະຊາຄົມ. ຫລັກການດຳເນີນ-ການ ຂອງ ກອງປະຊຸມດັ່ງກ່າວຈະຕ້ອງໄດ້ຖືກຮັບຮອງໂດຍສະພາປະສານງານ ອາຊຽນ;

(ງ) ຮັບມືກັບເຫດການສຸກເສີນ ທີ່ສົ່ງຜົນກະທົບຕໍ່ອາຊຽນ ໂດຍໃຊ້ມາດຕະການ ທີ່ເຫມາະສົມ;

(ຈ) ຕັດສິນບັນຫາຕ່າງໆທີ່ນຳສະເຫນີຕໍ່ກອງປະຊຸມສຸດຍອດ ພາຍໃຕ້ຫມວດທີ່ VII ແລະ VIII ຂອງກົດບັດ ສະບັບນີ້;

(ສ) ອະນຸມັດການສ້າງຕັ້ງ ແລະ ຍຸບບັນດາອົງກອນລັດຖະມົນຕີ ຂະແຫນງການ ແລະ ສະຖາບັນອື່ນໆຂອງອາຊຽນ; ແລະ

(ຊ) ແຕ່ງຕັ້ງເລຂາທິການໃຫຍ່ອາຊຽນ, ໂດຍມີຖານະຕຳແຫນ່ງທຽບເທົ່າລັດຖະ-ມົນຕີ ທີ່ສະເຫນີໂດຍລັດຖະມົນຕີຕ່າງປະເທດອາຊຽນ ເພື່ອທີ່ຈະປະຕິບັດ ຫນ້າທີ່ ດ້ວຍຄວາມໄວ້ເນື້ອເຊື່ອໃຈ ແລະ ຕາມຄວາມພໍໃຈ ຂອງບັນດາ ປະມຸກລັດ ຫລື ຫົວຫນ້າລັດຖະບານ.

3. ກອງປະຊຸມສຸດຍອດອາຊຽນຈະຕ້ອງ:

(ກ) ຈັດຂຶ້ນ ຢ່າງຫນ້ອຍ ສອງ ຄັ້ງ ຕໍ່ປີ, ແລະ ເປັນເຈົ້າພາບໂດຍປະເທດສະມາຊິກທີ່ ເປັນປະທານອາຊຽນ; ແລະ

(ຂ) ຈັດກອງປະຊຸມສຸດຍອດອາຊຽນຂຶ້ນ ເມື່ອມີຄວາມຈຳເປັນ ເຊິ່ງຖືເປັນກອງ-ປະຊຸມສະໄຫມພິເສດ ຫລື ສະເພາະກິດ ໂດຍການເປັນປະທານຂອງ ປະເທດ ສະມາຊິກທີ່ເປັນປະທານອາຊຽນ, ສ່ວນສະຖານທີ່ ແມ່ນອີງໃສ່ຄຳຕົກລົງ ຂອງບັນດາປະເທດສະມາຊິກ.

## ມາດຕາ 8
## ສະພາປະສານງານລັດຖະມົນຕີອາຊຽນ

1. ສະພາປະສານງານອາຊຽນ ຈະຕ້ອງປະກອບດ້ວຍ ບັນດາລັດຖະມົນຕີຕ່າງປະເທດ ອາຊຽນ ແລະ ພົບປະກັນຢ່າງຫນ້ອຍ ສອງຄັ້ງ ຕໍ່ ປີ.

2. ສະພາປະສານງານອາຊຽນຈະຕ້ອງ:

(ກ) ກະກຽມໃຫ້ແກ່ກອງປະຊຸມສຸດຍອດອາຊຽນ;

(ຂ) ປະສານການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ແລະ ຄໍາຕົກລົງຂອງກອງປະຊຸມສຸດຍອດອາຊຽນ;

(ຄ) ປະສານງານກັບບັນດາສະພາປະຊາຄົມອາຊຽນເພື່ອສົ່ງເສີມຄວາມສອດຄ່ອງທາງນະໂຍບາຍ, ມີປະສິດທິຜົນ ແລະ ການຮ່ວມມື ເຊິ່ງກັນ ແລະ ກັນ;

(ງ) ປະສານການລາຍງານຂອງສະພາປະຊາຄົມອາຊຽນຕໍ່ກອງປະຊຸມສຸດຍອດ;

(ຈ) ພິຈາລະນາບົດລາຍງານປະຈໍາປີ ຂອງເລຂາທິການໃຫຍ່ອາຊຽນ ກ່ຽວກັບວຽກງານຂອງອາຊຽນ;

(ສ) ພິຈາລະນາບົດລາຍງານຂອງເລຂາທິການໃຫຍ່ອາຊຽນ ກ່ຽວກັບໜ້າທີ່ ແລະ ການດໍາເນີນງານຂອງກອງເລຂາອາຊຽນ ແລະ ບັນດາອົງກອນທີ່ກ່ຽວຂ້ອງອື່ນໆ;

(ຊ) ຮັບຮອງເອົາການແຕ່ງຕັ້ງ ແລະ ການໝົດໜ້າທີ່ຂອງບັນດາຮອງເລຂາທິການ-ໃຫຍ່ອາຊຽນ ຕາມການສະເໜີ ຂອງເລຂາທິການໃຫຍ່ອາຊຽນ; ແລະ

(ຍ) ປະຕິບັດພາລະກິດອື່ນໆ ທີ່ໄດ້ກໍານົດໃນກົດບັດສະບັບນີ້, ຫລື ພາລະກິດອື່ນໆທີ່ອາດໄດ້ຮັບມອບໝາຍ ໂດຍກອງປະຊຸມສຸດຍອດອາຊຽນ.

3. ສະພາປະສານງານອາຊຽນຈະຕ້ອງໄດ້ຮັບການສະໜັບສະໜູນ ໂດຍບັນດາເຈົ້າໜ້າ-ທີ່ອາວຸໂສ ທີ່ກ່ຽວຂ້ອງ.

## ມາດຕາ 9
## ບັນດາສະພາປະຊາຄົມອາຊຽນ

1. ສະພາປະຊາຄົມອາຊຽນ ຈະປະກອບດ້ວຍ ປະຊາຄົມການເມືອງ ແລະ ຄວາມໝັ້ນຄົງອາຊຽນ, ປະຊາຄົມເສດຖະກິດອາຊຽນ ແລະ ປະຊາຄົມສັງຄົມວັດທະນະທໍາອາຊຽນ.
2. ແຕ່ລະສະພາປະຊາຄົມອາຊຽນ ຈະມີບັນດາອົງກອນລັດຖະມົນຕີຂະແໜງການ ທີ່ກ່ຽວຂ້ອງຕາມຂອບເຂດໜ້າທີ່ຂອງຕົນ.
3. ແຕ່ລະປະເທດສະມາຊິກ ຕ້ອງແຕ່ງຕັ້ງຜູ້ຕາງໜ້າລະດັບຊາດ ສໍາລັບແຕ່ລະກອງປະຊຸມຂອງສະພາປະຊາຄົມອາຊຽນ.
4. ເພື່ອບັນລຸບັນດາເປົ້າໝາຍຂອງແຕ່ລະເສົາຄໍ້າ ຂອງທັງສາມເສົາຄໍ້າຂອງປະຊາຄົມອາ-ຊຽນ, ແຕ່ລະສະພາປະຊາຄົມອາຊຽນ ຈະຕ້ອງ:

(ກ) ຮັບປະກັນການຈັດຕັ້ງປະຕິບັດ ບັນດາຄໍາຕົກລົງທີ່ກ່ຽວຂ້ອງຂອງກອງປະຊຸມສຸດຍອດອາຊຽນ;

(ຂ) ປະສານງານ ການປະຕິບັດງານ ຂອງບັນດາຂະແໜງການຕ່າງໆ ຕາມຂອບ-ເຂດການປະຕິບັດງານຂອງຕົນ, ແລະ ກ່ຽວກັບບັນຫາທີ່ທັບຊ້ອນກັນ ລະຫວ່າງບັນດາສະພາປະຊາຄົມ; ແລະ

(ຄ) ສະເຫນີບົດລາຍງານ ແລະ ຂໍ້ສະເຫນີແນະ ຕໍ່ກອງປະຊຸມສຸດຍອດ ກ່ຽວກັບບັນຫາທີ່ຢູ່ພາຍໃຕ້ຂອບເຂດການປະຕິບັດງານຂອງຕົນ;

5. ແຕ່ລະສະພາປະຊາຄົມອາຊຽນ ຈະຕ້ອງປະຊຸມກັນ ຢ່າງຫນ້ອຍ ສອງຄັ້ງ ຕໍ່ປີ ແລະ ເປັນປະທານໂດຍລັດຖະມົນຕີທີ່ເຫມາະສົມ ຈາກບັນດາປະເທດສະມາຊິກ ທີ່ເປັນປະທານອາຊຽນ.

6. ແຕ່ລະສະພາປະຊາຄົມອາຊຽນ ຈະຕ້ອງໄດ້ຮັບການສະຫນັບສະຫນູນ ໂດຍເຈົ້າຫນ້າທີ່ອາວຸໂສທີ່ກ່ຽວຂ້ອງ.

## ມາດຕາ 10
## ບັນດາອົງກອນລັດຖະມົນຕີຂະແຫນງການຂອງອາຊຽນ

1. ບັນດາອົງກອນລັດຖະມົນຕີຂະແຫນງການຂອງອາຊຽນຈະຕ້ອງ:
   (ກ) ປະຕິບັດຫນ້າທີ່ ໂດຍສອດຄ່ອງກັບສິດຫນ້າທີ່ ທີ່ໄດ້ຮັບມອບຫມາຍ;
   (ຂ) ຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ແລະ ຄໍາຕົກລົງຂອງກອງປະຊຸມສຸດຍອດພາຍໃຕ້ຂອບເຂດວຽກງານຂອງຕົນ;
   (ຄ) ຮັດແຫນ້ນການຮ່ວມມືໃນຂະແຫນງການຂອງຕົນ ເພື່ອສະຫນັບສະຫນູນການເຊື່ອມໂຍງ ແລະ ການສ້າງປະຊາຄົມອາຊຽນ; ແລະ
   (ງ) ສະເຫນີບົດລາຍງານ ແລະ ບັນດາຂໍ້ສະເຫນີແນະ ຕໍ່ບັນດາສະພາປະຊາຄົມທີ່ກ່ຽວຂ້ອງຂອງໃຜລາວ.

2. ແຕ່ລະອົງກອນລັດຖະມົນຕີຂະແຫນງການ ອາດມີ ບັນດາເຈົ້າຫນ້າທີ່ອາວຸໂສ ແລະ ບັນດາອົງກອນຍ່ອຍຕາມຂອບເຂດວຽກງານ ເພື່ອດໍາເນີນການປະຕິບັດຫນ້າທີ່ ດັ່ງທີ່ກໍານົດໄວ້ໃນເອກະສານຊ້ອນທ້າຍ ທີ ຫນຶ່ງ. ເອກະສານຊ້ອນທ້າຍຈະໄດ້ຮັບການປັບປຸງໂດຍເລຂາທິການໃຫຍ່ອາຊຽນ ຕາມການສະເຫນີຂອງຄະນະກໍາມະການບັນດາຜູ້ຕາງຫນ້າຖາວອນ ໂດຍບໍ່ນໍາໃຊ້ຂໍ້ກໍານົດວ່າດ້ວຍການດັດແກ້ພາຍໃຕ້ກົດບັດສະບັບນີ້.

## ມາດຕາ 11
## ເລຂາທິການໃຫຍ່ອາຊຽນ ແລະ ກອງເລຂາອາຊຽນ

1. ເລຂາທິການໃຫຍ່ອາຊຽນຈະຕ້ອງໄດ້ຮັບການແຕ່ງຕັ້ງໂດຍ ກອງປະຊຸມສຸດຍອດອາຊຽນ ຊຶ່ງມີໄລຍະການປະຕິບັດຫນ້າທີ່ ຫ້າ ປີ ຕໍ່ ຫນຶ່ງສະໄຫມ ໂດຍບໍ່ສາມາດຕໍ່ໄດ້ອີກ ຊຶ່ງໄດ້ຮັບການຄັດເລືອກມາຈາກຄົນສັນຊາດຂອງບັນດາປະເທດສະມາຊິກອາຊຽນ ບົນພື້ນຖານ ການຫມູນວຽນຕາມລໍາດັບຕົວອັກສອນພາສາອັງກິດ ໂດຍຄໍານຶງເຖິງ ຄວາມຊື່ສັດ,

ຄວາມສາມາດ ແລະ ມີປະສົບການທາງດ້ານວິຊາສະເພາະ ແລະ ຄວາມສະເໝີພາບທາງເພດ.

2. ເລຂາທິການໃຫຍ່ຈະຕ້ອງ:

(ກ) ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ໃນຕໍາແໜ່ງລະດັບສູງນີ້ ໂດຍສອດຄ່ອງກັບບັນດາຂໍ້ກໍານົດຂອງກົດບັດສະບັບນີ້ ແລະ ບັນດາເອກະສານ, ອະນຸສັນຍາ ແລະ ຫລັກການປະຕິບັດຕ່າງໆທີ່ກ່ຽວຂ້ອງຂອງອາຊຽນ;

(ຂ) ອໍານວຍຄວາມສະດວກ ແລະ ຕິດຕາມຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດບັນດາສັນຍາ ແລະ ຂໍ້ຕົກລົງຂອງອາຊຽນ, ແລະ ສະເໜີບົດລາຍງານປະຈໍາປີກ່ຽວກັບວຽກງານອາຊຽນຕໍ່ກອງປະຊຸມສຸດຍອດ;

(ຄ) ເຂົ້າຮ່ວມບັນດາກອງປະຊຸມສຸດຍອດ, ກອງປະຊຸມຂອງບັນດາປະຊາຄົມອາຊຽນ, ສະພາປະສານງານອາຊຽນ ແລະ ອົງກອນລັດຖະມົນຕີຂະແໜງການຕ່າງໆ ແລະ ກອງປະຊຸມອາຊຽນອື່ນໆ ທີ່ກ່ຽວຂ້ອງ;

(ງ) ສະເໜີທັດສະນະຂອງອາຊຽນ ແລະ ເຂົ້າຮ່ວມບັນດາກອງປະຊຸມ ກັບຄູ່ຮ່ວມພາຍນອກ ໂດຍສອດຄ່ອງກັບທິດຊີ້ນໍານະໂຍບາຍທີ່ໄດ້ຮັບອະນຸມັດ ແລະ ອໍານາດທີ່ໄດ້ມອບໃຫ້ເລຂາທິການໃຫຍ່ອາຊຽນ; ແລະ

(ຈ) ສະເໜີການແຕ່ງຕັ້ງ ແລະ ການໝົດໜ້າທີ່ຂອງບັນດາຮອງເລຂາທິການອາຊຽນຕໍ່ສະພາປະສານງານອາຊຽນເພື່ອຮັບຮອງ.

3. ເລຂາທິການໃຫຍ່ອາຊຽນ ຍັງຈະຕ້ອງເປັນຫົວໜ້າບໍລິຫານຂອງກອງເລຂາອາຊຽນ.

4. ເລຂາທິການໃຫຍ່ ຈະຕ້ອງໄດ້ຮັບການຊ່ວຍເຫລືອຈາກ ຮອງເລຂາທິການໃຫຍ່ທັງສີ່ທ່ານ ທີ່ມີຕໍາແໜ່ງທຽບເທົ່າລັດຖະມົນຕີຊ່ວຍວ່າການ. ບັນດາຮອງເລຂາທິການໃຫຍ່ຈະຕ້ອງມີຄວາມຮັບຜິດຊອບຕໍ່ເລຂາທິການໃຫຍ່ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ.

5. ຮອງເລຂາທິການອາຊຽນທັງ ສີ່ທ່ານ ຕ້ອງມີສັນຊາດທີ່ແຕກຕ່າງຈາກເລຂາທິການໃຫຍ່ ແລະ ຕ້ອງມາຈາກ ສີ່ ປະເທດສະມາຊິກທີ່ແຕກຕ່າງກັນ.

6. ຮອງເລຂາທິການໃຫຍ່ທັງ ສີ່ ຈະປະກອບດ້ວຍ:

(ກ) ຮອງເລຂາທິການໃຫຍ່ ສອງຄົນ ເຊິ່ງປະຕິບັດໜ້າທີ່ ສາມ ປີ ຕໍ່ ໜຶ່ງສະໄໝ ໂດຍທີ່ບໍ່ສາມາດຕໍ່ໄດ້ອີກ, ເລືອກມາຈາກບັນດາປະເທດສະມາຊິກອາຊຽນ ໂດຍອີງຕາມການໝູນວຽນຕາມລໍາດັບຕົວອັກສອນພາສາອັງກິດ ໂດຍຄໍານຶງເຖິງຄວາມຊື່ສັດ, ຄວາມສາມາດ ແລະ ມີປະສົບການທາງດ້ານວິຊາສະເພາະ ແລະ ຄວາມສະເໝີ ພາບທາງເພດ; ແລະ

(ຂ) ຮອງເລຂາທິການໃຫຍ່ ສອງຄົນ ທີ່ປະຕິບັດໜ້າທີ່ ສາມປີ ຕໍ່ ໜຶ່ງສະໄໝ ແລະ ສາມາດຕໍ່ໄດ້ອີກໜຶ່ງສະໄໝ (ສາມ ປີ) ໂດຍຄັດເລືອກມາຈາກການເປີດຮັບສະໝັກ ແບບເປີດກວ້າງ ບົນພື້ນຖານຄວາມຮູ້ຄວາມສາມາດ.

7. ກອງເລຂາອາຊຽນຈະຕ້ອງປະກອບດ້ວຍເລຂາທິການໃຫຍ່ອາຊຽນ ແລະ ບັນດາພະນັກງານເທົ່າທີ່ມີຄວາມຈຳເປັນ.

8. ເລຂາທິການໃຫຍ່ ແລະ ບັນດາພະນັກງານຈະຕ້ອງ:

   (ກ) ຍຶດໝັ້ນໃນມາດຕະຖານສູງສຸດ ຂອງຄວາມຊື່ສັດ, ຄວາມມີປະສິດທິພາບ ແລະ ຄວາມສາມາດໃນການປະຕິບັດໜ້າທີ່ຂອງຕົນ;

   (ຂ) ບໍ່ສະແຫວງຫາ ແລະ ຮັບຄຳສັ່ງຈາກລັດຖະບານໃດໆ ຫລື ຈາກພາຍນອກພາກພື້ນອາຊຽນ; ແລະ

   (ຄ) ຕ້ອງລະເວັ້ນທຸກໆການກະທຳ ທີ່ອາດສົ່ງຜົນສະທ້ອນຕໍ່ຕຳແໜ່ງຂອງຕົນໃນຖານະທີ່ເປັນພະນັກງານກອງເລຂາອາຊຽນ ເຊິ່ງມີຄວາມຮັບຜິດຊອບ ສະເພາະຕໍ່ອາຊຽນເທົ່ານັ້ນ.

9. ແຕ່ລະປະເທດສະມາຊິກ ຕ້ອງໃຫ້ຄວາມເຄົາລົບ ຕໍ່ ຄວາມຮັບຜິດຊອບ ຂອງເລຂາທິການໃຫຍ່ ແລະ ພະນັກງານ ທີ່ມີລັກສະນະສະເພາະຂອງອາຊຽນ ແລະ ບໍ່ສະ-ແຫວງຫາ ເພື່ອມີອິດທິພົນຕໍ່ບຸກຄົນເຫລົ່ານັ້ນໃນການປະຕິບັດໜ້າທີ່ວຽກງານຂອງເຂົາເຈົ້າ.

## ມາດຕາ 12

## ຄະນະກຳມະການຜູ້ຕາງໜ້າຖາວອນປະຈຳອາຊຽນ

1. ແຕ່ລະປະເທດສະມາຊິກອາຊຽນ ຕ້ອງແຕ່ງຕັ້ງຜູ້ຕາງໜ້າຖາວອນປະຈຳອາຊຽນ ໜຶ່ງທ່ານ ໃນຕຳແໜ່ງເອກອັກຄະລັດຖະທູດ ໂດຍມີສຳນັກງານປະຈຳຢູ່ ຈາກາກຕາ.

2. ບັນດາຜູ້ຕາງໜ້າຖາວອນຈະຕ້ອງປະກອບເຂົ້າເປັນ ຄະນະກຳມະການຜູ້ຕາງໜ້າຖາວອນປະຈຳອາຊຽນ, ເຊິ່ງຈະຕ້ອງ:

   (ກ) ສະໜັບສະໜູນວຽກງານຂອງບັນດາສະພາປະຊາຄົມອາຊຽນ ແລະ ບັນດາອົງກອນລັດຖະມົນຕີຂະແໜງການຂອງອາຊຽນ;

   (ຂ) ປະສານງານກັບບັນດາກອງເລຂາອາຊຽນແຫ່ງຊາດ ແລະ ກັບບັນດາອົງກອນລັດຖະມົນຕີຂະແໜງການຂອງອາຊຽນ;

   (ຄ) ປະສານງານ ກັບ ເລຂາທິການໃຫຍ່ອາຊຽນ ແລະ ກອງເລຂາອາຊຽນ ກ່ຽວກັບທຸກວຽກງານທີ່ກ່ຽວຂ້ອງ;

   (ງ) ອຳນວຍຄວາມສະດວກໃນການຮ່ວມມືຂອງອາຊຽນກັບພາຍນອກ; ແລະ

   (ຈ) ປະຕິບັດໜ້າທີ່ອື່ນໆ ທີ່ອາດຈະກຳນົດໂດຍສະພາປະສານງານອາຊຽນ.

## ມາດຕາ 13
## ກອງເລຂາອາຊຽນແຫ່ງຊາດ

1. ແຕ່ລະປະເທດສະມາຊິກຕ້ອງສ້າງຕັ້ງກອງເລຂາອາຊຽນແຫ່ງຊາດຂອງຕົນ ທີ່ຈະຕ້ອງ:
   (ກ) ປະຕິບັດຫນ້າທີ່ເປັນຈຸດປະສານງານແຫ່ງຊາດ;
   (ຂ) ເປັນແຫລ່ງເກັບກຳຂໍ້ມູນຂ່າວສານສຳລັບທຸກໆບັນຫາຂອງອາຊຽນໃນລະດັບຊາດ;
   (ຄ) ປະສານງານການຈັດຕັ້ງປະຕິບັດບັນດາຄຳຕົກລົງຂອງອາຊຽນ ໃນລະດັບຊາດ;
   (ງ) ປະສານງານ ແລະ ສະຫນັບສະຫນູນການກະກຽມລະດັບຊາດ ສຳລັບກອງປະຊຸມອາຊຽນຕ່າງໆ;
   (ຈ) ສົ່ງເສີມຄວາມເປັນເອກະລັກຂອງອາຊຽນ ແລະ ການຮັບຮູ້ອາຊຽນ ໃນລະດັບຊາດ; ແລະ
   (ສ) ປະກອບສ່ວນໃນການສ້າງປະຊາຄົມອາຊຽນ.

## ມາດຕາ 14
## ອົງກອນສິດທິມະນຸດອາຊຽນ

1. ໂດຍສອດຄ່ອງຕາມເປົ້າຫມາຍ ແລະ ຫລັກການ ຂອງກົດບັດອາຊຽນ ກ່ຽວກັບການສົ່ງ-ເສີມ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານ, ອາຊຽນຈະຕ້ອງສ້າງຕັ້ງອົງ-ກອນສິດທິມະນຸດອາຊຽນຂຶ້ນ.
2. ອົງກອນສິດທິມະນຸດອາຊຽນນີ້ ຈະຕ້ອງດຳເນີນງານ ໂດຍສອດຄ່ອງກັບບົດພາລະບົດບາດທີ່ຈະກຳນົດໂດຍກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ.

## ມາດຕາ 15
## ມູນນິທິອາຊຽນ

1. ມູນນິທິອາຊຽນຈະຕ້ອງສະຫນັບສະຫນູນເລຂາທິການໃຫຍ່ອາຊຽນ ແລະ ຮ່ວມມື ກັບບັນດາອົງກອນທີ່ກ່ຽວຂ້ອງຂອງອາຊຽນ ເພື່ອສະຫນັບສະຫນູນ ການສ້າງປະຊາຄົມອາຊຽນ ດ້ວຍການ ສົ່ງເສີມການຮັບຮູ້ເອກະລັກຂອງອາຊຽນ, ການພົວພັນລະຫວ່າງປະຊາຊົນ ກັບ ປະຊາຊົນ, ແລະ ການຮ່ວມມືຢ່າງໃກ້ຊິດລະຫວ່າງຂະແຫນງການທຸລະກິດ, ອົງການຈັດຕັ້ງສັງຄົມພົນລະເຮືອນ, ສະຖາບັນການສຶກສາ ແລະ ຄູ່ຮ່ວມອື່ນໆຂອງອາຊຽນ ໃຫ້ຫລາຍຂຶ້ນ.

2. ມູນນິທິອາຊຽນຈະຕ້ອງຮັບຜິດຊອບຕໍ່ເລຂາທິການໃຫຍ່ອາຊຽນ ຊຶ່ງຈະເປັນຜູ້ນຳສະເໜີບົດລາຍງານຂອງມູນນິທິ ຕໍ່ກອງປະຊຸມສຸດຍອດ ໂດຍຜ່ານສະພາປະສານງານອາຊຽນ.

## ໝວດທີ V
## ບັນດາອົງກອນທີ່ມີການພົວພັນກັບອາຊຽນ

### ມາດຕາ 16
### ບັນດາອົງກອນທີ່ມີການພົວພັນກັບອາຊຽນ

1. ອາຊຽນອາດມີການພົວພັນ ກັບບັນດາອົງກອນທີ່ ສະໜັບສະໜູນກົດບັດອາຊຽນ, ໂດຍສະເພາະແມ່ນບັນດາເປົ້າໝາຍ ແລະ ຫລັກການຂອງກົດບັດນີ້. ບັນດາອົງກອນເຫລົ່ານີ້ ແມ່ນຈະໄດ້ລວບລວມໄວ້ໃນເອກະສານຊ້ອນທ້າຍທີ ສອງ.
2. ຫລັກການ ການດຳເນີນງານ ແລະ ເງື່ອນໄຂສຳລັບການພົວພັນຈະຕ້ອງໄດ້ມີການກຳນົດໂດຍຄະນະກຳມະການບັນດາຜູ້ຕາງໜ້າຖາວອນ ຕາມການສະເໜີຂອງເລຂາທິການໃຫຍ່ອາຊຽນ.
3. ເອກະສານຊ້ອນທ້າຍ ທີ່ ສອງ ອາດຈະໄດ້ຮັບການປັບປຸງ ໂດຍເລຂາທິການໃຫຍ່ອາຊຽນ ຕາມການສະເໜີຂອງຄະນະກຳມະການຜູ້ຕາງໜ້າຖາວອນ ໂດຍບໍ່ນຳໃຊ້ຂໍ້ກຳນົດວ່າດ້ວຍການດັດແກ້ພາຍໃຕ້ກົດບັດສະບັບນີ້.

## ໝວດທີ VI
## ອະພິສິດ ແລະ ເອກະສິດ

### ມາດຕາ 17
### ອະພິສິດ ແລະ ເອກະສິດຂອງອາຊຽນ

1. ອາຊຽນມີອະພິສິດ ແລະ ເອກະສິດພາຍໃນດິນແດນຂອງປະເທດສະມາຊິກ ເຊິ່ງເປັນສິ່ງທີ່ຈຳເປັນໃນການປະຕິບັດເປົ້າໝາຍຂອງອາຊຽນ.
2. ບັນດາອະພິສິດ ແລະ ເອກະສິດຈະຕ້ອງຖືກກຳນົດໄວ້ ໃນຂໍ້ຕົກລົງຕ່າງຫາກ ລະຫວ່າງອາຊຽນກັບປະເທດສະມາຊິກທີ່ເປັນເຈົ້າພາບ.

## ມາດຕາ 18
## ອະພິສິດ ແລະ ເອກະສິດຂອງເລຂາທິການໃຫຍ່ອາຊຽນ ແລະ ພະນັກງານຂອງກອງເລຂາອາຊຽນ

1. ເລຂາທິການໃຫຍ່ອາຊຽນ ແລະ ພະນັກງານຂອງກອງເລຂາອາຊຽນ ທີ່ເຂົ້າຮ່ວມວຽກງານໃນກິດຈະກຳທາງການຂອງອາຊຽນ ຫລື ຕາງໜ້າໃຫ້ອາຊຽນໃນບັນດາປະເທດສະມາຊິກ ຈະຕ້ອງໄດ້ຮັບອະພິສິດ ແລະ ເອກະສິດ ທີ່ຈຳເປັນສຳລັບການປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງອິດສະລະ.
2. ອະພິສິດ ແລະ ເອກະສິດ ພາຍໃຕ້ມາດຕານີ້ ຈະຕ້ອງໄດ້ຖືກກຳນົດ ໄວ້ໃນຂໍ້ຕົກລົງຕ່າງ-ຫາກຂອງອາຊຽນ.

## ມາດຕາ 19
## ອະພິສິດ ແລະ ເອກະສິດຂອງຜູ້ຕາງໜ້າຖາວອນ ແລະ ເຈົ້າໜ້າທີ່ ທີ່ ປະຕິບັດໜ້າທີ່ວຽກງານອາຊຽນ

1. ບັນດາຜູ້ຕາງໜ້າຖາວອນຂອງບັນດາປະເທດສະມາຊິກອາຊຽນປະຈຳອາຊຽນ, ແລະ ເຈົ້າໜ້າທີ່ຂອງບັນດາປະເທດສະມາຊິກ ທີ່ເຂົ້າຮ່ວມກິດຈະກຳທາງການຂອງອາຊຽນ ຫລື ຕາງໜ້າອາຊຽນ ໃນບັນດາປະເທດສະມາຊິກ ຈະຕ້ອງໄດ້ຮັບອະພິສິດ ແລະ ເອກະສິດ ທີ່ຈຳເປັນເພື່ອປະຕິບັດໜ້າທີ່ຂອງເຂົາເຈົ້າ.
2. ບັນດາອະພິສິດ ແລະ ເອກະສິດຂອງຜູ້ຕາງໜ້າຖາວອນ ແລະ ເຈົ້າໜ້າທີ່ ທີ່ປະຕິບັດໜ້າທີ່ວຽກງານອາຊຽນ ຈະຕ້ອງໄດ້ຮັບການຄຸ້ມຄອງ ພາຍໃຕ້ສົນທິສັນຍາກຸງວຽນ ປີ 1961 ວ່າດ້ວຍ ການພົວພັນທາງການທູດ ຫລື ໂດຍສອດຄ່ອງກັບກົດໝາຍພາຍໃນຂອງປະເທດສະມາຊິກອາຊຽນ ທີ່ກ່ຽວຂ້ອງ.

# ໝວດທີ VII
# ການກຳນົດຂໍ້ຕົກລົງ

## ມາດຕາ 20
## ການປຶກສາຫາລື ແລະ ການເຫັນດີເປັນເອກະສັນ

1. ຫລັກການການປຶກສາຫາລື ແລະ ການເຫັນດີເປັນເອກະສັນ ຈະເປັນຫລັກການພື້ນຖານຂອງອາຊຽນ.
2. ໃນກໍລະນີທີ່ບໍ່ສາມາດບັນລຸຂໍ້ຕົກລົງຕາມຫລັກການການເຫັນດີເປັນເອກະສັນ, ກອງປະຊຸມສຸດຍອດອາຊຽນຈະເປັນຜູ້ຕັດສິນໃນການຊອກຫາວິທີສະເພາະ ເພື່ອກຳນົດຂໍ້ຕົກລົງ.
3. ບໍ່ມີຂໍ້ຄວາມໃດໆໃນວັກທີ 1 ແລະ ວັກທີ 2 ຂອງມາດຕານີ້ຈະມີຜົນກະທົບຕໍ່ ວິທີການກຳນົດຂໍ້ຕົກລົງ ດັ່ງທີ່ລະບຸໄວ້ໃນບັນດາເອກະສານທາງກົດໝາຍທີ່ກ່ຽວຂ້ອງອື່ນໆ ຂອງອາຊຽນ.
4. ໃນກໍລະນີທີ່ມີ ການລະເມີດຢ່າງຮ້າຍແຮງຕໍ່ກົດບັດອາຊຽນ ຫລື ບໍ່ປະຕິບັດຕາມ ຄຳຕົກລົງ, ບັນຫານີ້ ຈະຕ້ອງໄດ້ນຳສະເໜີຕໍ່ຂອງກອງປະຊຸມສຸດຍອດອາຊຽນ ເພື່ອຕັດສິນ.

## ມາດຕາ 21
## ການຈັດຕັ້ງປະຕິບັດ ແລະ ຂັ້ນຕອນດຳເນີນການ

1. ແຕ່ລະສະພາປະຊາຄົມ ລັດຖະມົນຕີອາຊຽນຈະຕ້ອງກຳນົດຫລັກການ ຂັ້ນຕອນການດຳເນີນງານຂອງຕົນເອງ.
2. ໃນການຈັດຕັ້ງປະຕິບັດບັນດາພັນທະທາງດ້ານເສດຖະກິດ, ຮູບແບບການມີ ສ່ວນຮ່ວມແບບຜ່ອນສັ້ນຜ່ອນຍາວ, ລວມທັງ ຮູບແບບອາຊຽນ ລົບ X, ອາດສາມາດ ນຳໃຊ້ໄດ້ໃນເມື່ອມີການເຫັນດີ ຢ່າງເປັນເອກະສັນ.

## ໝວດທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 22
### ຫລັກການທົ່ວໄປ

1. ປະເທດສະມາຊິກ ຕ້ອງພະຍາຍາມແກ້ໄຂທຸກບັນຫາ ໂດຍສັນຕິວິທີຢ່າງທັນການ ດ້ວຍການພົບປະສົນທະນາ, ການປຶກສາຫາລື ແລະ ການເຈລະຈາ.
2. ອາຊຽນຈະຕ້ອງຮັກສາ ແລະ ສ້າງຕັ້ງບັນດາກົນໄກການແກ້ໄຂຂໍ້ຂັດແຍ່ງໃນທຸກຂະແໜງການຮ່ວມມືຂອງອາຊຽນ.

### ມາດຕາ 23
### ການປະສານງານ, ການປະນີປະນອມ ແລະ ການໄກ່ເກ່ຍ

1. ບັນດາປະເທດສະມາຊິກທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງ ອາດຈະເຫັນດີນຳໃຊ້ການປະສານງານ, ການປະນີປະນອມ ຫລື ການໄກ່ເກ່ຍໄດ້ທຸກເວລາ ເພື່ອແກ້ໄຂຂໍ້ຂັດແຍ່ງຕາມຂອບກຳນົດເວລາ ດັ່ງທີ່ໄດ້ຕົກລົງກັນ.
2. ບັນດາຄູ່ກໍລະນີຂອງຂໍ້ຂັດແຍ່ງ ອາດຈະຂໍຮ້ອງໃຫ້ປະທານ ອາຊຽນ ຫລື ເລຂາທິການໃຫຍ່ອາຊຽນ ໃຊ້ຄວາມສາມາດຕາມໜ້າທີ່ຕຳແໜ່ງ ເປັນຜູ້ປະສານງານ, ເປັນຜູ້ສ້າງຄວາມປອງດອງ ຫລື ເປັນຜູ້ໄກ່ເກ່ຍໃນການແກ້ໄຂບັນຫາ.

### ມາດຕາ 24
### ກົນໄກການແກ້ໄຂຂໍ້ຂັດແຍ່ງໃນບັນດາເອກະສານສະເພາະ

1. ບັນຫາຂໍ້ຂັດແຍ່ງທີ່ກ່ຽວພັນສະເພາະກັບບັນດາເອກະສານສະເພາະຂອງອາຊຽນ ຈະຕ້ອງໄດ້ຮັບການແກ້ໄຂດ້ວຍກົນໄກ ແລະ ຂັ້ນຕອນການດຳເນີນການ ເຊິ່ງກຳນົດໄວ້ໃນບັນດາເອກະສານເຫລົ່ານັ້ນ.
2. ບັນດາຂໍ້ຂັດແຍ່ງ ທີ່ບໍ່ກ່ຽວຂ້ອງກັບການຕີຄວາມໝາຍ ແລະ ການນຳໃຊ້ເອກະສານໃດໆຂອງອາຊຽນ ຈະຕ້ອງໄດ້ຮັບການແກ້ໄຂຢ່າງສັນຕິວິທີ ໂດຍສອດຄ່ອງກັບສົນທິສັນຍາໄມຕີຈິດ ແລະ ການຮ່ວມມືໃນອາຊີຕາເວັນອອກສ່ຽງໃຕ້ ແລະ ຫລັກການການດຳເນີນການຂອງສົນທິສັນຍາສະບັບນີ້.

3. ໃນກໍລະນີທີ່ບໍ່ມີການກຳນົດໄວ້ສະເພາະ, ບັນດາຂໍ້ຂັດແຍ່ງທີ່ກ່ຽວພັນເຖິງການຕີຄວາມ-ໝາຍ ແລະ ການນຳໃຊ້ບັນດາຂໍ້ຕົກລົງທາງດ້ານເສດຖະກິດອາຊຽນ ຈະຕ້ອງໄດ້ຮັບການແກ້ໄຂໂດຍສອດຄ່ອງກັບອະນຸສັນຍາອາຊຽນ ວ່າດ້ວຍການສົ່ງເສີມກົນໄກການແກ້ໄຂຂໍ້ຂັດແຍ່ງ.

## ມາດຕາ 25
## ການສ້າງຕັ້ງບັນດາກົນໄກການແຂ້ໄຂຂໍ້ຂັດແຍ່ງ

ໃນກໍລະນີທີ່ບໍ່ມີການກຳນົດໄວ້ສະເພາະ, ບັນດາກົນໄກການແກ້ໄຂຂໍ້ຂັດແຍ່ງທີ່ເໝາະສົມ, ລວມທັງການແກ້ໄຂຂໍ້ຂັດແຍ່ງດ້ວຍກຳມະການ, ຈະຕ້ອງໄດ້ຮັບການສ້າງຕັ້ງຂຶ້ນສຳລັບຂໍ້ຂັດ-ແຍ່ງ ທີ່ກ່ຽວພັນກັບການຕີຄວາມໝາຍ ແລະ ການນຳໃຊ້ກົດບັດສະບັບນີ້ ແລະ ບັນດາເອກະສານອາຊຽນອື່ນໆ.

## ມາດຕາ 26
## ຂໍ້ຂັດແຍ່ງທີ່ບໍ່ໄດ້ຮັບການແກ້ໄຂ

ໃນກໍລະນີທີ່ຂໍ້ຂັດແຍ່ງຍັງບໍ່ໄດ້ຮັບການແກ້ໄຂ ຫລັງຈາກທີ່ໄດ້ນຳໃຊ້ບັນດາຂໍ້ກຳນົດກ່ອນໜ້ານີ້ໃນໝວດນີ້, ຂໍ້ຂັດແຍ່ງດັ່ງກ່າວຈະຖືກນຳສະເໜີຕໍ່ກອງປະຊຸມສຸດຍອດອາຊຽນ ເພື່ອຕັດສິນ.

## ມາດຕາ 27
## ການປະຕິບັດຕາມ

1. ເລຂາທິການໃຫຍ່ອາຊຽນ ໂດຍການຊ່ວຍເຫລືອຈາກກອງເລຂາອາຊຽນ ຫລື ອົງກອນອື່ນໆພາຍໃນອາຊຽນ ທີ່ໄດ້ຖືກມອບໝາຍ ຈະຕ້ອງຕິດຕາມການປະຕິບັດຕາມຜົນຂອງການສອບສວນ, ຂໍ້ສະເໜີແນະ ຫລື ການຕັດສິນ ທີ່ເປັນຜົນມາຈາກກົນໄກການແກ້ໄຂຂໍ້ຂັດແຍ່ງ ແລະ ນຳສະເໜີບົດລາຍງານກ່ຽວກັບການປະຕິບັດນັ້ນ ຕໍ່ກອງປະຊຸມສຸດຍອດອາຊຽນ.
2. ປະເທດສະມາຊິກໃດຫາກໄດ້ຮັບຜົນກະທົບຈາກການບໍ່ປະຕິບັດຕາມ ຜົນຂອງການສອບສວນ, ຂໍ້ສະເໜີແນະ ຫລື ການຕັດສິນ ທີ່ເປັນຜົນມາຈາກກົນໄກການແກ້ໄຂຂໍ້ຂັດແຍ່ງ ອາດຍື່ນເລື່ອງດັ່ງກ່າວ ຕໍ່ກອງປະຊຸມສຸດຍອດ ເພື່ອຕັດສິນ.

## ມາດຕາ 28
## ບົດບັນຍັດຂອງກົດບັດ ສະຫະປະຊາດ ແລະ ລະບຽບການສາກົນອື່ນໆທີ່ກ່ຽວຂ້ອງ

ໃນກໍລະນີທີ່ຍັງບໍ່ໄດ້ກຳນົດໄວ້ ໃນກົດບັດສະບັບນີ້, ບັນດາປະເທດສະມາຊິກມີສິດນຳໃຊ້ ວິທີການແກ້ໄຂດ້ວຍສັນຕິວິທີ ດັ່ງທີ່ໄດ້ກຳນົດໄວ້ ໃນມາດຕາ 33 (1) ຂອງກົດບັດສະຫະປະຊາຊາດ ຫລື ດຳເນີນການແກ້ໄຂຕາມເອກະສານທາງກົດຫມາຍສາກົນ (ສົນທິສັນຍາ) ທີ່ປະເທດຄູ່ກໍລະນີ ເປັນພາຄີ.

## ຫມວດທີ IX
## ງົບປະມານ ແລະ ການເງິນ

## ມາດຕາ 29
## ຫລັກການທົ່ວໄປ

1. ອາຊຽນຈະຕ້ອງສ້າງກົດລະບຽບ ແລະ ຂັ້ນຕອນດ້ານການເງິນ ໃຫ້ສອດຄ່ອງຕາມມາດຕະຖານສາກົນ.
2. ອາຊຽນຈະຕ້ອງປະຕິບັດຕາມນະໂຍບາຍການບໍລິຫານດ້ານການເງິນທີ່ດີ ແລະ ລະບຽບວິໄນດ້ານການເງິນຢ່າງເຂັ້ມງວດ.
3. ບັນຊີການເງິນຈະຕ້ອງມີການກວດກາ ທັງພາຍໃນ ແລະ ພາຍນອກ.

## ມາດຕາ 30
## ງົບປະມານການບໍລິຫານ ແລະ ການເງິນຂອງກອງເລຂາອາຊຽນ

1. ກອງເລຂາອາຊຽນຈະຕ້ອງໄດ້ຮັບການສະຫນອງທາງດ້ານການເງິນທີ່ຈຳເປັນ ເພື່ອປະຕິບັດຫນ້າທີ່ໄດ້ຢ່າງມີປະສິດທິຜົນ.
2. ງົບປະມານການບໍລິຫານກອງເລຂາອາຊຽນ ແມ່ນມາຈາກການປະກອບສ່ວນທີ່ເທົ່າທຽມກັນຂອງແຕ່ລະປະເທດສະມາຊິກອາຊຽນໃນທຸກໆປີ ຊຶ່ງຈະຕ້ອງສົ່ງໃຫ້ທັນຕາມກຳນົດເວລາ.

3. ເລຂາທິການໃຫຍ່ອາຊຽນ ຈະຕ້ອງກະກຽມງົບປະມານບໍລິຫານປະຈໍາປີ ຂອງກອງ-ເລຂາອາຊຽນ ເພື່ອຂໍອະນຸມັດຈາກສະພາປະສານງານອາຊຽນຕາມການ ສະເໜີຂອງຄະນະກໍາມະການຜູ້ຕາງໜ້າຖາວອນ.

4. ກອງເລຂາອາຊຽນຈະຕ້ອງດໍາເນີນການໃຫ້ສອດຄ່ອງ ກັບ ກົດລະບຽບ ແລະ ຂັ້ນຕອນດ້ານການເງິນ ທີ່ກໍານົດໂດຍສະພາປະສານງານອາຊຽນຕາມການສະເໜີ ຂອງຄະນະກໍາມະການຜູ້ຕາງໜ້າຖາວອນ.

## ໝວດທີ X
## ການບໍລິຫານ ແລະ ຂັ້ນຕອນດໍາເນີນການ

### ມາດຕາ 31
### ປະທານອາຊຽນ

1. ການເປັນປະທານອາຊຽນ ຈະຕ້ອງໝູນວຽນກັນທຸກໆປີ ຕາມລໍາດັບຕົວອັກສອນພາສາອັງກິດຂອງບັນດາປະເທດສະມາຊິກ.

2. ປະທານອາຊຽນຈະຕ້ອງມີພຽງປະເທດດຽວໃນສົກປີໜຶ່ງຕາມປະຕິທິນອາຊຽນ ເຊິ່ງປະເທດສະມາຊິກທີ່ເປັນປະທານອາຊຽນ ຈະຕ້ອງເປັນປະທານ:
   (ກ) ກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມສຸດຍອດອື່ນໆທີ່ກ່ຽວຂ້ອງ;
   (ຂ) ສະພາປະສານງານອາຊຽນ;
   (ຄ) ສະພາປະຊາຄົມອາຊຽນທັງສາມສະພາ;
   (ງ) ບັນດາອົງກອນລັດຖະມົນຕີຂະແໜງການ ແລະ ເຈົ້າໜ້າທີ່ອາວຸໂສຕາມຄວາມເໝາະສົມ; ແລະ
   (ຈ) ຄະນະກໍາມະການຜູ້ຕາງໜ້າຖາວອນ.

### ມາດຕາ 32
### ບົດບາດຂອງປະທານອາຊຽນ

ປະເທດສະມາຊິກທີ່ເປັນປະທານອາຊຽນ ຈະຕ້ອງ:

(ກ) ສົ່ງເສີມ ແລະ ເພີ່ມທະວີຜົນປະໂຫຍດ ແລະ ຄວາມຢູ່ດີກິນດີ ຂອງອາຊຽນຢ່າງຫ້າວຫັນ, ລວມທັງຄວາມພະຍາຍາມໃນການສ້າງປະຊາຄົມອາຊຽນ ໂດຍຜ່ານຂໍ້ລິເລີ່ມ ທາງດ້ານນະໂຍບາຍ, ການປະສານງານ, ການເຫັນດີເປັນເອກະສັນ ແລະ ການຮ່ວມມື;

(ຂ) ຮັບປະກັນຄວາມເປັນແກນກາງຂອງອາຊຽນ;

(ຄ) ຮັບປະກັນການຕອບສະໜອງຕໍ່ບັນຫາຮີບດ່ວນ ຫລື ວິກິດການທີ່ສົ່ງຜົນກະທົບຕໍ່ອາຊຽນ ຢ່າງມີປະສິດທິພາບ ແລະ ທັນການ, ລວມທັງການເປັນຜູ້ປະສານງານ ແລະ ການກະກຽມອື່ນໆ ເພື່ອຮັບມືກັບເຫດການເຫລົ່ານັ້ນໂດຍທັນທີ;

(ງ) ຕາງໜ້າອາຊຽນໃນການຮັດແໜ້ນ ແລະ ສົ່ງເສີມການພົວພັນອັນໃກ້ຊິດກວ່າເກົ່າ ກັບພາຍນອກ; ແລະ

(ຈ) ປະຕິບັດພາລະກິດ ແລະ ໜ້າທີ່ອື່ນໆ ທີ່ອາດຈະໄດ້ຮັບມອບໝາຍ.

## ມາດຕາ 33
## ພິທີການ ແລະ ການປະຕິບັດທາງການທູດ

ອາຊຽນ ແລະ ບັນດາປະເທດສະມາຊິກຈະຕ້ອງຍຶດຖືຫລັກການພິທີການ ແລະ ການປະຕິບັດຕ່າງໆທາງການທູດ ທີ່ມີຢູ່ ໃນການດຳເນີນທຸກໆກິດຈະກຳ ທີ່ພົວພັນເຖິງອາຊຽນ. ການປ່ຽນ-ແປງໃດໜຶ່ງຈະຕ້ອງໄດ້ຮັບອະນຸມັດ ໂດຍສະພາປະສານງານອາຊຽນ ຕາມການສະເໜີຂອງຄະນະກຳມະການຜູ້ຕາງໜ້າຖາວອນ.

## ມາດຕາ 34
## ພາສາທີ່ໃຊ້ເຮັດວຽກງານຂອງອາຊຽນ

ພາສາທີ່ໃຊ້ເຮັດວຽກງານອາຊຽນ ຈະຕ້ອງແມ່ນ ພາສາອັງກິດ.

# ໝວດທີ XI
# ເອກະລັກ ແລະ ສັນຍາລັກ

## ມາດຕາ 35
## ເອກະລັກຂອງອາຊຽນ

ອາຊຽນຕ້ອງສົ່ງເສີມເອກະລັກລວມຂອງອາຊຽນ ແລະ ຄວາມຮູ້ສຶກເປັນເຈົ້າຂອງໃນໝູ່ປະຊາຊົນຂອງອາຊຽນ ເພື່ອບັນລຸໄດ້ຊະຕາກຳ, ເປົ້າໝາຍ ແລະ ຄ່ານິຍົມຮ່ວມກັນ.

## ມາດຕາ 36
## ຄໍາຂວັນອາຊຽນ

ຄໍາຂວັນອາຊຽນແມ່ນ: “ວິໄສທັດໜຶ່ງດຽວ, ເອກະລັກໜຶ່ງດຽວ, ປະຊາຄົມໜຶ່ງດຽວ”.

## ມາດຕາ 37
## ທຸງອາຊຽນ

ທຸງອາຊຽນຈະຕ້ອງເປັນດັ່ງທີ່ກໍານົດໃນເອກະສານຊ້ອນທ້າຍ ທີ ສາມ.

## ມາດຕາ 38
## ກາໝາຍອາຊຽນ

ກາໝາຍອາຊຽນຈະຕ້ອງເປັນດັ່ງທີ່ກໍານົດໃນເອກະສານຊ້ອນທ້າຍ ທີ ສີ່.

## ມາດຕາ 39
## ວັນອາຊຽນ

ຖືເອົາ ວັນທີ 8 ເດືອນ ສິງຫາ ເປັນວັນອາຊຽນ.

## ມາດຕາ 40
## ເພງສັນລະເສີນອາຊຽນ

ອາຊຽນຈະຕ້ອງມີເພງສັນລະເສີນ.

# ໝວດທີ XII
# ການພົວພັນກັບພາຍນອກ

## ມາດຕາ 41
## ການດຳເນີນການພົວພັນກັບພາຍນອກ

1. ອາຊຽນຕ້ອງຂະຫຍາຍການພົວພັນມິດຕະພາບ ແລະ ການປຶກສາຫາລືທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ການຮ່ວມມື ແລະ ການເປັນຄູ່ຮ່ວມ ກັບ ບັນດາປະເທດ, ອົງການຈັດຕັ້ງອະນຸພາກພື້ນ, ພາກພື້ນ ແລະ ສາກົນ ແລະ ກັບບັນດາສະຖາບັນ.
2. ການພົວພັນກັບພາຍນອກຂອງອາຊຽນຈະຕ້ອງຍຶດໝັ້ນເປົ້າໝາຍ ແລະ ຫລັກການທີ່ກຳນົດໄວ້ ໃນກົດບັດສະບັບນີ້.
3. ອາຊຽນຕ້ອງເປັນກຳລັງຂັບເຄື່ອນຕົ້ນຕໍ ໃນໂຄງຮ່າງການຈັດຕັ້ງພາກພື້ນທີ່ອາຊຽນໄດ້ລິເລີ່ມຂຶ້ນມາ ແລະ ຮັກສາໄວ້ຄວາມເປັນແກນກາງ ໃນການຮ່ວມມືພາກພື້ນ ແລະການສ້າງປະຊາຄົມ.
4. ໃນການດຳເນີນການພົວພັນກັບພາຍນອກຂອງອາຊຽນ, ບັນດາປະເທດສະມາຊິກ, ບົນພື້ນຖານຄວາມເປັນເອກະພາບ ແລະ ຄວາມສາມັກຄີ, ຈະຕ້ອງປະສານງານ ແລະພະຍາຍາມ ກຳນົດຈຸດຢືນລວມ ແລະ ດຳເນີນການຮ່ວມກັນ.
5. ທິດທາງນະໂຍບາຍຍຸດທະສາດໃນການພົວພັນກັບພາຍນອກຂອງອາຊຽນ ຈະຕ້ອງກຳນົດ ໂດຍກອງປະຊຸມສຸດຍອດອາຊຽນ.
6. ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຈະຕ້ອງຮັບປະກັນຄວາມສະເໝີຕົ້ນສະເໝີປາຍ ແລະ ຄວາມສອດຄ່ອງກັນ ໃນການດຳເນີນການພົວພັນກັບພາຍນອກ.
7. ອາຊຽນອາດບັນລຸຂໍ້ຕົກລົງກັບບັນດາປະເທດ, ອົງການ ຈັດຕັ້ງອະນຸພາກພື້ນ, ພາກພື້ນແລະ ສາກົນ ແລະ ກັບບັນດາສະຖາບັນ. ຂັ້ນຕອນການບັນລຸຂໍ້ຕົກລົງດັ່ງກ່າວ ຈະຕ້ອງກຳນົດ ໂດຍສະພາປະສານງານອາຊຽນ ໂດຍປຶກສາຫາລືກັບບັນດາສະພາປະຊາຄົມອາຊຽນ.

## ມາດຕາ 42
## ປະເທດປະສານງານກັບຄູ່ເຈລະຈາ

1. ບັນດາປະເທດສະມາຊິກ ໃນຖານະເປັນປະເທດຜູ້ປະສານງານ ຈະຕ້ອງຜັດປ່ຽນກັນ ໃນການຮັບຜິດຊອບລວມ ການປະສານງານ ແລະ ການສົ່ງເສີມຜົນປະໂຫຍດຂອງອາຊຽນ

ໃນການພົວພັນກັບບັນດາຄູ່ເຈລະຈາ, ອົງການຈັດຕັ້ງອະນຸພາກພື້ນ, ພາກພື້ນ ແລະ ສາກົນ ແລະ ກັບບັນດາສະຖາບັນທີ່ກ່ຽວຂ້ອງ.

2. ໃນການພົວພັນກັບບັນດາຄູ່ຮ່ວມພາຍນອກ, ບັນດາປະເທດປະສານງານຈະຕ້ອງ:
   (ກ) ຕາງໜ້າອາຊຽນ ແລະ ສົ່ງເສີມການພົວພັນ ບົນພື້ນຖານການເຄົາລົບ ເຊິ່ງກັນ ແລະກັນ, ຄວາມສະເໝີພາບ ໂດຍສອດຄ່ອງກັບບັນດາຫລັກການຂອງອາຊຽນ;
   (ຂ) ເປັນປະທານຮ່ວມບັນດາກອງປະຊຸມທີ່ກ່ຽວຂ້ອງ ລະຫວ່າງອາຊຽນກັບຄູ່ຮ່ວມພາຍນອກ; ແລະ
   (ຄ) ໄດ້ຮັບການສະໜັບສະໜູນ ຈາກບັນດາຄະນະກຳມະການອາຊຽນ ທີ່ກ່ຽວຂ້ອງ ຢູ່ປະເທດທີ ສາມ ແລະ ບັນດາອົງການຈັດຕັ້ງສາກົນ.

## ມາດຕາ 43
## ບັນດາຄະນະກຳມະການອາຊຽນ ຢູ່ປະເທດທີສາມ ແລະ ບັນດາອົງການຈັດຕັ້ງສາກົນ

1. ບັນດາຄະນະກຳມະການອາຊຽນ ຢູ່ ປະເທດທີ່ສາມ ອາດຈະໄດ້ຮັບການສ້າງຕັ້ງຂຶ້ນ ໃນບັນດາປະເທດທີ່ບໍ່ແມ່ນສະມາຊິກອາຊຽນ ເຊິ່ງປະກອບດ້ວຍບັນດາຫົວໜ້າສຳນັກງານການທູດຂອງບັນດາປະເທດສະມາຊິກອາຊຽນ. ຄະນະກຳມະການທີ່ຄ້າຍຄືກັນນີ້ ອາດຈະໄດ້ຮັບການສ້າງຕັ້ງຂຶ້ນ ໃນການພົວພັນກັບບັນດາອົງການຈັດຕັ້ງສາກົນ. ຄະນະກຳມະການເຫລົ່ານັ້ນຈະຕ້ອງສົ່ງເສີມຜົນປະໂຫຍດຂອງອາຊຽນ ແລະ ຄວາມເປັນເອກະລັກຂອງອາຊຽນ ໃນບັນດາປະເທດເຈົ້າພາບ ແລະ ບັນດາອົງການຈັດຕັ້ງສາກົນ.
2. ກອງປະຊຸມບັນດາລັດຖະມົນຕີຕ່າງປະເທດອາຊຽນຈະກຳນົດບັນດາຫລັກການດຳເນີນການ ຂອງຄະນະກຳມະການເຫລົ່ານັ້ນ.

## ມາດຕາ 44
## ສະຖານະພາບຂອງຄູ່ຮ່ວມພາຍນອກ

1. ໃນການດຳເນີນການພົວພັນຂອງອາຊຽນກັບພາຍນອກ, ກອງປະຊຸມລັດຖະມົນຕີຕ່າງ-ປະເທດອາຊຽນ ອາດໃຫ້ສະຖານະພາບຢ່າງເປັນທາງການແກ່ຄູ່ຮ່ວມພາຍນອກ ເປັນຄູ່ຮ່ວມເຈລະຈາ, ຄູ່ຮ່ວມເຈລະຈາຂະແໜງການ, ຄູ່ຮ່ວມເພື່ອການພັດທະນາ, ຜູ້ສັງ-ເກດການພິເສດ, ແຂກ, ຫລື ສະຖານະພາບອື່ນໆ ທີ່ອາດຈະມີການກຳນົດຂຶ້ນອີກ.

2. ບັນດາຄູ່ຮ່ວມພາຍນອກ ອາດຈະໄດ້ຖືກເຊີນເຂົ້າຮ່ວມບັນດາກອງປະຊຸມ ຫລື ກິດຈະກຳການຮ່ວມມືຕ່າງໆຂອງອາຊຽນ ໂດຍປາສະຈາກການໃຫ້ສະຖານະພາບທາງການໃດໆ ຕາມທີ່ໄດ້ກຳນົດໄວ້ໃນຫລັກການດຳເນີນງານ.

## ມາດຕາ 45

## ການພົວພັນກັບລະບົບຂອງອົງການສະຫະປະຊາຊາດ ແລະ ບັນດາອົງການຈັດຕັ້ງ ແລະ ສະຖາບັນສາກົນ

1. ອາຊຽນ ອາດສະແຫວງຫາສະຖານະພາບທີ່ເຫມາະສົມ ກັບລະບົບຂອງອົງການສະຫະປະຊາຊາດ ກໍ່ຄື ກັບ ອົງການຈັດຕັ້ງອະນຸພາກພື້ນ, ພາກພື້ນ ແລະ ສາກົນ ແລະ ກັບບັນດາສະຖາບັນອື່ນໆ.
2. ສະພາປະສານງານອາຊຽນ ຈະຕົກລົງກ່ຽວກັບການເຂົ້າຮ່ວມ ຂອງອາຊຽນໃນບັນດາອົງການຈັດຕັ້ງອະນຸພາກພື້ນ, ພາກພື້ນ ແລະ ສາກົນ ແລະ ກັບບັນດາສະຖາອື່ນໆ.

## ມາດຕາ 46

## ການໃຫ້ການຮັບຮອງຜູ້ຕາງຫນ້າຂອງບັນດາປະເທດທີ່ບໍ່ແມ່ນ ສະມາຊິກອາຊຽນ ປະຈຳອາຊຽນ

ບັນດາປະເທດທີ່ບໍ່ແມ່ນສະມາຊິກອາຊຽນ ແລະ ບັນດາອົງການຈັດຕັ້ງ ລະຫວ່າງ ລັດຖະບານທີ່ກ່ຽວຂ້ອງ ອາດແຕ່ງຕັ້ງ ຫລື ມອບຫມາຍບັນດາທູດຂອງຕົນ ປະຈຳອາຊຽນ. ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຈະເປັນຜູ້ຕັດສິນກ່ຽວກັບການຮັບຮອງດັ່ງກ່າວ.

# ຫມວດທີ XIII

# ບົດບັນຍັດທົ່ວໄປ ແລະ ບົດບັນຍັດສຸດທ້າຍ

## ມາດຕາ 47

## ການລົງນາມ, ການໃຫ້ສັດຕະຍາບັນ, ການເກັບຮັກສາ ແລະ ການມີຜົນບັງຄັບໃຊ້

1. ປະເທດສະມາຊິກທັງຫມົດ ຈະຕ້ອງລົງນາມໃນກົດບັດສະບັບນີ້.
2. ກົດບັດສະບັບນີ້ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຈາກທຸກປະເທດສະມາຊິກອາຊຽນ ໂດຍສອດຄ່ອງກັບຂັ້ນຕອນພາຍໃນຂອງແຕ່ລະປະເທດສະມາຊິກ.

3. ສານສັດຕະຍາບັນຈະຕ້ອງເກັບຮັກສາໄວ້ນຳ ເລຂາທິການໃຫຍ່ອາຊຽນ ຊຶ່ງຈະເປັນຜູ້ແຈ້ງໃຫ້ແກ່ປະເທດສະມາຊິກອື່ນຊາບທັນທີ ກ່ຽວກັບການມອບສານສັດຕະຍາບັນຂອງບັນດາປະເທດສະມາຊິກ.
4. ກົດບັດອາຊຽນຈະມີຜົນບັງຄັບໃຊ້ ນັບແຕ່ມື້ທີ່ ສາມສິບ ເປັນຕົ້ນໄປ ພາຍຫລັງທີ່ສານສັດຕະຍາບັນສະບັບທີ່ ສິບ ໄດ້ຖືກມອບໃຫ້ເລຂາທິການໃຫຍ່ອາຊຽນເກັບຮັກສາໄວ້.

## ມາດຕາ 48
## ການດັດແກ້

1. ປະເທດສະມາຊິກໃດໜຶ່ງອາດສະເໜີ ການດັດແກ້ກົດບັດອາຊຽນ.
2. ສະພາປະສານງານອາຊຽນ ໂດຍການເຫັນດີເປັນເອກະພາບຈະຍື່ນຂໍ້ສະເໜີເພື່ອດັດແກ້ກົດບັດອາຊຽນ ໄປຍັງກອງປະຊຸມສຸດຍອດອາຊຽນ ເພື່ອຂໍຄຳຕົກລົງ.
3. ການດັດແກ້ກົດບັດອາຊຽນທີ່ໄດ້ຮັບການເຫັນດີເປັນເອກະສັນ ຈາກກອງປະຊຸມສຸດຍອດອາຊຽນ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນຈາກທຸກປະເທດສະມາຊິກ ໂດຍສອດຄ່ອງ ກັບມາດຕາ 47 ຂອງກົດບັດສະບັບນີ້.
4. ການດັດແກ້ ຈະມີຜົນບັງຄັບໃຊ້ ນັບແຕ່ມື້ທີ່ ສາມສິບ ເປັນຕົ້ນໄປ ພາຍຫລັງທີ່ສານສັດຕະຍາບັນສະບັບທີ່ ສິບ ໄດ້ຖືກມອບໃຫ້ເລຂາທິການໃຫຍ່ອາຊຽນເກັບຮັກສາໄວ້.

## ມາດຕາ 49
## ພາລະບົດບາດ ແລະ ຫລັກການດຳເນີນການ

ຖ້າບໍ່ມີການກຳນົດໄວ້ຕ່າງຫາກໃນກົດບັດສະບັບນີ້, ສະພາປະສານງານອາຊຽນຈະກຳນົດພາລະບົດບາດ ແລະ ຫລັກການດຳເນີນການ ພ້ອມທັງຮັບປະກັນຄວາມສອດຄ່ອງຂອງມັນ.

## ມາດຕາ 50
## ການທົບທວນຄືນ

ກົດບັດສະບັບນີ້ອາດຖືກທົບທວນຄືນ ຫລັງຈາກ ຫ້າ ປີ ທີ່ມີຜົນບັງຄັບໃຊ້ ຫລື ເວລາໃດກໍ່ໄດ້ຕາມແຕ່ກອງປະຊຸມສຸດຍອດອາຊຽນຈະຕົກລົງກັນ.

## ມາດຕາ 51
## ການຕີຄວາມໝາຍກົດບັດອາຊຽນ

1. ໃນກໍລະນີທີ່ມີການຮຽກຮ້ອງຂອງປະເທດສະມາຊິກໃດໜຶ່ງ, ການຕີຄວາມໝາຍກົດບັດອາຊຽນ ຈະຕ້ອງດຳເນີນການໂດຍກອງເລຂາອາຊຽນ ໂດຍສອດຄ່ອງກັບຫລັກການດຳເນີນການ ທີ່ ກຳນົດໂດຍສະພາປະສານງານອາຊຽນ.
2. ຂໍ້ຂັດແຍ່ງໃດໆທີ່ເກີດຈາກການຕີຄວາມໝາຍຂອງກົດບັດສະບັບນີ້ ຈະຕ້ອງໄດ້ຮັບການແກ້ໄຂ ໃຫ້ສອດຄ່ອງກັບບັນດາຂໍ້ກຳນົດທີ່ກ່ຽວຂ້ອງໃນໝວດທີ VIII ຂອງກົດບັດສະບັບນີ້.
3. ບັນດາຫົວຂໍ້ ແລະ ຫົວເລື່ອງ ທີ່ໃຊ້ໃນກົດບັດສະບັບນີ້ ແມ່ນເພື່ອຈຸດປະສົງສຳລັບການອ້າງອີງເທົ່ານັ້ນ.

## ມາດຕາ 52
## ຄວາມຕໍ່ເນື່ອງທາງດ້ານກົດໝາຍ

1. ທຸກສົນທິສັນຍາ, ອານຸສັນຍາ, ຂໍ້ຕົກລົງ, ຖະແຫລງການ, ສັນຍາ, ແລະ ເອກະສານອື່ນໆຂອງອາຊຽນ ທີ່ມີຜົນບັງຄັບໃຊ້ກ່ອນກົດບັດອາຊຽນສະບັບນີ້ ຈະຍັງສືບຕໍ່ມີຜົນບັງຄັບໃຊ້ອີກຕໍ່ໄປ.
2. ໃນກໍລະນີ ທີ່ບໍ່ມີຄວາມສອດຄ່ອງກັນ ລະຫວ່າງ ສິດ ແລະ ພັນທະຂອງບັນດາປະເທດສະມາຊິກອາຊຽນພາຍໃຕ້ເອກະສານເຫລົ່ານັ້ນ ແລະ ພາຍໃຕ້ກົດບັດສະບັບນີ້, ກົດບັດສະບັບ ນີ້ຈະຕ້ອງຢູ່ເໜືອບັນດາເອກະສານທັງໝົດ.

## ມາດຕາ 53
## ຕົ້ນສະບັບກົດບັດອາຊຽນ

ຕົ້ນສະບັບຂອງກົດບັດອາຊຽນທີ່ເປັນພາສາອັງກິດ ເຊິ່ງໄດ້ລົງນາມແລ້ວ ຈະຕ້ອງເກັບຮັກສາໄວ້ນຳເລຂາທິການໃຫຍ່ອາຊຽນ ເຊິ່ງຈະເປັນຜູ້ແຈກຢາຍ ສະບັບສຳເນົາທີ່ໄດ້ຮັບການຮັບຮອງໃຫ້ແກ່ທຸກປະເທດສະມາຊິກ.

## ມາດຕາ 54
## ການຂຶ້ນທະບຽນກົດບັດອາຊຽນ

ອີງຕາມມາດຕາ 102, ວັກທີ 1 ຂອງກົດບັດສະຫະປະຊາຊາດ, ກົດບັດອາຊຽນ ຈະຕ້ອງນຳໄປຂຶ້ນທະບຽນ ກັບກອງເລຂາຂອງອົງການສະຫະປະຊາຊາດ ໂດຍເລຂາທິການໃຫຍ່ອາຊຽນ.

## ມາດຕາ 55
## ຊັບສິນຂອງອາຊຽນ

ຊັບສິນ ແລະ ກອງທຶນຕ່າງໆຂອງອົງການ ຈະຕ້ອງຢູ່ພາຍໃຕ້ກຳມະສິດ ຂອງ ອາຊຽນ.

ເຮັດຂຶ້ນທີ່ ສິງກະໂປ ໃນວັນທີ ຊາວ ເດືອນ ພະຈິກ ປີ ສອງພັນເຈັດ, ຊຶ່ງມີຕົ້ນສະບັບຫນຶ່ງດຽວເປັນພາສາອັງກິດ.

ຕາງຫນ້າ ບຣູໄນ ດາຣູສະລາມ
(ລົງນາມ)
HAJI HASSANAL BOLKIAH
ຊຸນຕານ ແຫ່ງ ບຣູໄນ ດາຣູສະລາມ

ຕາງຫນ້າ ຣາຊະອານາຈັກ ກຳປູເຈຍ
(ລົງນາມ)
SAMDECH HUN SEN
ນາຍົກລັດຖະມົນຕີ

ຕາງຫນ້າ ສາທາລະນະລັດ ອິນໂດເນເຊຍ
(ລົງນາມ)
DR. SUSILO BAMBANG YUDHOYONO
ປະທານາທິບໍດີ

ຕາງໜ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

(ລົງນາມ)

ບົວສອນ ບຸບຜາວັນ

ນາຍົກລັດຖະມົນຕີ

ຕາງໜ້າ ມາເລເຊຍ

(ລົງນາມ)

DATO' SERI ABDULLAH AHMAD BADAWI

ນາຍົກລັດຖະມົນຕີ

ຕາງໜ້າ ສະຫະພາບ ມຽນມາ

(ລົງນາມ)

ພົນເອກ THEIN SEIN

ນາຍົກລັດຖະມົນຕີ

ຕາງໜ້າ ສາທາລະນະລັດ ຟີລິບປິນ

(ລົງນາມ)

GLORIA MACAPAGAL-ARROYO

ປະທານາທິບໍດີ

ຕາງໜ້າ ສາທາລະນະລັດ ສິງກະໂປ

(ລົງນາມ)

LEE HSIEN LOONG

ນາຍົກລັດຖະມົນຕີ

ຕາງໜ້າ ຣາຊະອານາຈັກໄທ

(ລົງນາມ)

ພົນເອກ SURAYUD CHULANONT (RET.)

ນາຍົກລັດຖະມົນຕີ

ຕາງໜ້າ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

(ລົງນາມ)

NGUYEN TAN DUNG

ນາຍົກລັດຖະມົນຕີ

--------------------------------

# ເອກະສານຊ້ອນທ້າຍ ທີ 1
# ບັນດາອົງກອນລັດຖະມົນຕີຂະແໜງການອາຊຽນ

## I. ປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ

1. ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ
   - ຄະນະກຳມະການປະຈຳອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍການວາງແຜນພັດທະນາ

2. ຄະນະກຳມາທິການວ່າດ້ວຍເຂດປອດອາວຸດນິວເຄຣຍອາຊີຕາເວັນອອກສ່ຽງໃຕ້
   - ກຳມະການບໍລິຫານຂອງຄະນະກຳມາທິການວ່າດ້ວຍເຂດປອດອາວຸດນິວເຄຣຍອາຊີຕາເວັນອອກສ່ຽງໃຕ້

3. ກອງປະຊຸມລັດຖະມົນຕີປ້ອງກັນປະເທດ ອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສປ້ອງກັນປະເທດອາຊຽນ

4. ກອງປະຊຸມລັດຖະມົນຕີກົດໝາຍອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສກົດໝາຍອາຊຽນ

5. ກອງປະຊຸມລັດຖະມົນຕີອາຊຽນວ່າດ້ວຍອາຊະຍາກຳຂ້າມຊາດ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍອາຊະຍາກຳຂ້າມຊາດ
   - ເຈົ້າໜ້າທີ່ອາວຸໂສວ່າດ້ວຍບັນຫາຢາເສບຕິດ
   - ຫົວໜ້າກົມຕຳຫລວດກວດຄົນເຂົ້າ-ອອກເມືອງ ແລະ ຫົວໜ້າກົງສູນຂອງກະຊວງການຕ່າງປະເທດ

6. ເວທີພາກພື້ນອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສເວທີພາກພື້ນອາຊຽນ

## II. ປະຊາຄົມເສດຖະກິດອາຊຽນ

1. ກອງປະຊຸມລັດຖະມົນຕີເສດຖະກິດອາຊຽນ
   - ຄະນະສະເພາະກິດລະດັບສູງວ່າດ້ວຍການເຊື່ອມໂຍງເສດຖະກິດອາຊຽນ
   - ເຈົ້າໜ້າທີ່ອາວຸໂສເສດຖະກິດອາຊຽນ

2. ສະພາເຂດການຄ້າເສລີອາຊຽນ

3. ສະພາເຂດການລົງທຶນອາຊຽນ

4. ກອງປະຊຸມລັດຖະມົນຕີການເງິນອາຊຽນ

- ກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຮອງປະທານທະນາຄານກາງອາຊຽນ
- ກອງປະຊຸມຫົວໜ້າກົມພາສີອາຊຽນ

5. ກອງປະຊຸມລັດຖະມົນຕີອາຊຽນວ່າດ້ວຍກະສິກຳ ແລະປ່າໄມ້

- ກອງປະຊຸມເຈົ້າໜ້າທີ່ອາວຸໂສກະສິກຳ ແລະປ່າໄມ້
- ເຈົ້າໜ້າທີ່ອາວຸໂສອາຊຽນວ່າດ້ວຍປ່າໄມ້

6. ກອງປະຊຸມລັດຖະມົນຕີພະລັງງານອາຊຽນ

- ກອງປະຊຸມເຈົ້າໜ້າທີ່ອາວຸໂສພະລັງງານອາຊຽນ

7. ກອງປະຊຸມລັດຖະມົນຕີບໍ່ແຮ່ອາຊຽນ

- ກອງປະຊຸມເຈົ້າໜ້າທີ່ອາວຸໂສບໍ່ແຮ່ອາຊຽນ

8. ກອງປະຊຸມລັດຖະມົນຕີວິທະຍາສາດ ແລະ ເທັກໂນໂລຊີອາຊຽນ

- ຄະນະກຳມະການວ່າດ້ວຍວິທະຍາສາດ ແລະ ເທັກໂນໂລຊີ

9. ກອງປະຊຸມລັດຖະມົນຕີໂທລະຄົມມະນາຄົມ ແລະ ເທັກໂນໂລຊີຂໍ້ມູນຂ່າວສານອາຊຽນ

- ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍໂທລະຄົມມະນາຄົມ ແລະ ເທັກໂນໂລຊີຂໍ້ມູນຂ່າວສານອາຊຽນ
- ສະພາຜູ້ຄວບຄຸມໂທລະຄົມມະນາຄົມອາຊຽນ

10. ກອງປະຊຸມລັດຖະມົນຕີຂົນສົ່ງອາຊຽນ

- ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍການຂົນສົ່ງອາຊຽນ

11. ກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ

- ກອງປະຊຸມອົງການທ່ອງທ່ຽວແຫ່ງຊາດອາຊຽນ

12. ການຮ່ວມມືເພື່ອການພັດທະນາອ່າງແມ່ນ້ຳຂອງອາຊຽນ

- ຄະນະກຳມະການບໍລິຫານການຮ່ວມມືເພື່ອການພັດທະນາອ່າງແມ່ນ້ຳຂອງອາຊຽນ
- ຄະນະກຳມະການລະດັບສູງດ້ານການເງິນອາຊຽນ

13. ສູນພະລັງງານອາຊຽນ

14. ສູນອາຊຽນ-ຍີ່ປຸ່ນ ທີ່ ໂຕກຽວ

## III. ປະຊາຄົມສັງຄົມ-ວັດທະນະທຳອາຊຽນ

1. ລັດຖະມົນຕີທີ່ຮັບຜິດຊອບດ້ານຂໍ້ມູນຂ່າວສານອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສທີ່ຮັບຜິດຊອບດ້ານຂໍ້ມູນຂ່າວສານ

2. ລັດຖະມົນຕີທີ່ຮັບຜິດຊອບດ້ານວັດທະນະທຳ ແລະ ສິນລະປະ ອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສດ້ານວັດທະນະທຳ ແລະ ສິນລະປະອາຊຽນ

3. ກອງປະຊຸມລັດຖະມົນຕີກະຊວງສຶກສາອາຊຽນ
   - ເຈົ້າໜ້າທີ່ອາວຸໂສດ້ານການສຶກສາອາຊຽນ

4. ກອງປະຊຸມລັດຖະມົນຕີວ່າດ້ວຍການຄຸ້ມຄອງໄພພິບັດອາຊຽນ
   - ຄະນະກຳມະການວ່າດ້ວຍການຄຸ້ມຄອງໄພພິບັດອາຊຽນ

5. ກອງປະຊຸມລັດຖະມົນຕີວ່າດ້ວຍສິ່ງແວດລ້ອມອາຊຽນ
   - ເຈົ້າໜ້າທີ່ອາວຸໂສວ່າດ້ວຍສິ່ງແວດລ້ອມອາຊຽນ

6. ກອງປະຊຸມຂອງບັນດາພາຄີຂອງຂໍ້ຕົກລົງອາຊຽນວ່າດ້ວຍມົນພິດໝອກຄວັນຂ້າມແດນ
   - ຄະນະກຳມະການພາຍໃຕ້ກອງປະຊຸມຂອງບັນດາພາຄີຂອງຂໍ້ຕົກລົງອາຊຽນວ່າດ້ວຍມົນພິດໝອກຄວັນຂ້າມແດນ

7. ກອງປະຊຸມລັດຖະມົນຕີກະຊວງສາທາລະນະສຸກອາຊຽນ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍການພັດທະນາສຸຂະພາບ

8. ກອງປະຊຸມລັດຖະມົນຕີແຮງງານອາຊຽນ
   - ເຈົ້າໜ້າທີ່ອາວຸໂສວ່າດວ້ຍແຮງງານ
   - ຄະນະກຳມະການອາຊຽນວ່າດ້ວຍການຈັດຕັ້ງປະຕິບັດຖະແຫລງການອາຊຽນວ່າດ້ວຍການປົກປ້ອງ ແລະ ສິ່ງເສີມສິດຂອງແຮງງານເຄື່ອນຍ້າຍ

9. ລັດຖະມົນຕີອາຊຽນວ່າດ້ວຍການພັດທະນາຊົນນະບົດ ແລະ ການລົບລ້າງຄວາມທຸກຍາກ
   - ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍການພັດທະນາຊົນນະບົດ ແລະ ການລົບລ້າງຄວາມທຸກຍາກ

10. ກອງປະຊຸມລັດຖະມົນຕີອາຊຽນວ່າດ້ວຍສະຫວັດດີການສັງຄົມ ແລະ ການພັດທະນາ
    - ກອງປະຊຸມເຈົ້າໜ້າທີ່ອາວຸໂສວ່າດ້ວຍສະຫວັດດີການສັງຄົມ ແລະ ການພັດທະນາ

11. ກອງປະຊຸມລັດຖະມົນຕີອາຊຽນວ່າດ້ວຍຊາວໜຸ່ມ
    - ເຈົ້າໜ້າທີ່ອາວຸໂສວ່າດ້ວຍຊາວໜຸ່ມ

12. ກອງປະຊຸມອາຊຽນວ່າດ້ວຍບັນຫາລັດຖະກອນ
    - ກອງປະຊຸມອາຊຽນວ່າດ້ວຍບັນຫາລັດຖະກອນ

13. ສູນຊີວະນາໆພັນອາຊຽນ
14. ສູນປະສານງານອາຊຽນສຳລັບການຊ່ວຍເຫລືອດ້ານມະນຸດສະທຳໃນການຄຸ້ມຄອງໄພພິບັດ
15. ສູນຂໍ້ມູນແຜ່ນດິນໄຫວອາຊຽນ
16. ສູນອຸຕຸນິຍົມວິທະຍາອາຊຽນ
17. ເຄືອຂ່າຍມະຫາວິທະຍາໄລອາຊຽນ

..................................................

# ເອກະສານຊ້ອນທ້າຍທີ 2

# ບັນດາອົງກອນຕ່າງໆ ທີ່ພົວພັນກັບອາຊຽນ

1. **ລັດຖະສະພາ**

   ສະມັດຊາລັດຖະສະພາອາຊຽນ

2. **ອົງກອນພາກທຸລະກິດ**

   ກອງປະຊຸມສາຍການບິນອາຊຽນ
   ສະມາຄົມສົ່ງເສີມສຸຂະພາບປະຈຳອາຊີອາຄະເນ
   ສະຫະພັນຍານພາຫານະອາຊຽນ
   ສະມາຄົມທະນາຄານອາຊຽນ
   ສະພາທີ່ປຶກສາທຸລະກິດອາຊຽນ
   ເວທີທຸລະກິດອາຊຽນ
   ສະພາການຄ້າ ແລະອຸດສາຫະກຳອາຊຽນ
   ສະພາອຸດສາຫະກຳເຄມີການຄ້າ
   ສະຫະພັນອຸດສາຫະກຳຕ່ຳແຜ່ນອາຊຽນ
   ສະພາອຸດສາຫະກຳເຟີນີເຈີອາຊຽນ
   ສະພາການປະກັນໄພອາຊຽນ
   ສະມາຄົມຊັບສິນທາງປັນຍາອາຊຽນ
   ສະມາຄົມສະໜາມບິນອາຊຽນ
   ສະຫະພາບອຸດສາຫະກຳເຫຼັກ ແລະເຫຼັກກ້າອາຊຽນ
   ສະມາຄົມການຢາອາຊຽນ
   ສະມາຄົມທ່ອງທ່ຽວອາຊຽນ
   ສະຫະພັນສະມາຄົມເສດຖະກິດອາຊຽນ
   ສະຫະພັນສະພາຂົນສົ່ງທາງເຮືອອາຊຽນ
   ສະພາທຸລະກິດລະຫວ່າງອາເມລິກາ-ອາຊຽນ

3. **ສະຖາບັນຄົ້ນຄ້ວາ ແລະ ວິຊາການ**

   ຕາໜ່າງສະຖາບັນຄົ້ນຄ້ວາຍຸດທະສາດ ລະຫວ່າງປະເທດອາຊຽນ

4. **ອົງການຈັດຕັ້ງສັງຄົມພົນລະເຮືອນ**

   ສະຖາບັນການສຶກສາດ້ານວິທະຍາສາດ ວິສະວະກຳ ແລະ ເທັກໂນໂລຢີ ອາຊຽນ
   ສະຖາບັນການສຶກສາດ້ານວິສະວະກຳ ແລະ ເທັກໂນໂລຢີອາຊຽນ

ສະມາຄົມວາງແຜນ ແລະເຄຫາອາຊຽນ
ສະມາຄົມນັກຣັງສີວິທະຍາອາຊຽນ
ສະຫະພັນໝາກເສິກອາຊຽນ
ສະຫະພັນນາຍຈ້າງອາຊຽນ
ສະຫະພັນອົງການຈັດຕັ້ງແມ່ຍິງອາຊຽນ
ສະຫະພາບຜູ້ຮັບເຫມົາກໍ່ສ້າງອາຊຽນ
ສະມາຄົມຜູ້ຜະລິດເຄື່ອງສຳອາງອາຊຽນ
ສະພາອາດີດນັກສຶກສາຍີ່ປຸ່ນ
ສະພາອາຈານອາຊຽນ
ສະຫະພັນຈິດຕະເວດ ແລະສຸຂະພາບຈິດອາຊຽນ
ສະຫະພັນນັກບັນຊີອາຊຽນ
ສະຫະພັນຜູ້ຮັບເໝົາວິສະວະກຳໄຟຟ້າອາຊຽນ
ສະຫະພັນອົງການວິສາວະກອນອາຊຽນ
ສະຫະພັນສະໂມສອນການບິນອາຊຽນ
ສະຫະພັນສະມາຄົມຜູ້ຮັບເໝົາຂົນສົ່ງສິນຄ້າອາຊຽນ
ສະຫະພັນມູນນິທິພະຍາດຫົວໃຈອາຊຽນ
ສະຫະພັນວັດແທກ ແລະສຳຫຼວດດິນອາຊຽນ
ສະຫະພັນສະມາຄົມບໍ່ແຮ່ອາຊຽນ
ສະຫະພັນການປະມົງອາຊຽນ
ສະຫະພັນບານເຕະອາຊຽນ
ສະໂມສອນອຸດສາຫະກຳຜະລິດຕະພັນເຄື່ອງປາຂອງດົງອາຊຽນ
ສະມາຄົມນັກສຶກສາປ່າໄມ້ອາຊຽນ
ສະມາຄົມການພັດທະນາ ແລະການສົ່ງເສີມຫັດຖະກຳອາຊຽນ
ສະມາຄົມວ່າວອາຊຽນ
ສະມາຄົມກົດໝາຍອາຊຽນ
ສະມາຄົມນັກສຶກສາກົດໝາຍອາຊຽນ
ສະມາຄົມອຸດສາຫະກຳດິນຕີອາຊຽນ
ສະມາຄົມໄສຍະກຳທາງປະສາດອາຊຽນ
ສະຫະພັນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານກ່ຽວກັບຜູ້ສູງອາຍຸອາຊຽນ
ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານເພື່ອການປ້ອງກັນການໃຊ້ຢາເສບຕິດ ແລະ ສານເສບ-ຕິດອາຊຽນ
ກຸ່ມຜູ້ຜະລິດນ້ຳມັນອາຊຽນ
ສະມາຄົມໄສຍະກຳກະດູກອາຊຽນ

ສະມາຄົມທ່ານໝໍປິ່ນປົວເດັກນ້ອຍອາຊຽນ
ສະຫະພັນກິລາຄົນພິການອາຊຽນ
ສະມາຄົມທ່າເຮືອອາຊຽນ
ສະມາຄົມພະຍາດທາລັດຊີເມຍອາຊຽນ
ສະມາຄົມຜູ້ປະເມີນລາຄາອາຊຽນ
ສະໂມສອນຜູ້ຜະລິດນ້ຳມັນພືດອາຊຽນ
ຫຸ້ນສ່ວນອາຊີເພື່ອການພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດອາຊີ
ຄະນະກຳມະການເພື່ອການຮ່ວມມືຊາວໜຸ່ມອາຊຽນ
ສະຫະພັນທີ່ປຶກສາດ້ານວິສະວະກຳອາຊຽນ
ສະຫະພັນອົງກອນປະຊາສຳພັນອາຊຽນ
ສະຫະພັນສະມາຄົມເຈົ້າຂອງເຮືອອາຊຽນ
ຄະນະກຳມະການສະມາຄົມແພດອາຊຽນ
ສະມາຄົມພະຍາດຂໍ່ອັກເສບອາຊຽນ
ສະຖາບັນພາກພື້ນອາຊີອາຄະເນເພື່ອຊຸມຊົນ ແລະການສຶກສາ
ມູນນິທິໂຄງການແລກປ່ຽນການສຶກສາໃນພາກພື້ນອາຊີອາຄະເນ
ສະຫະພັນນັກຮົບເກົ່າອາຊຽນ

## 5. ກຸ່ມຜູ້ມີສ່ວນໄດ້ສ່ວນເສຍອື່ນໆ ໃນອາຊຽນ

ຕຳຫຼວດອາຊຽນ
ສະຫະພັນສະຖາບັນວິທະຍາສາດ ແລະເທັກໂນໂລຢີດ້ານອາຫານອາຊຽນ
ສູນພັດທະນາການປະມົງອາຊີອາຄະເນ
ຄະນະໜ່ວຍງານສະເພາະກິດວ່າດ້ວຍກົນໄກສິດທິມະນຸດອາຊຽນ

.....................................................

## ເອກະສານຊ້ອນທ້າຍທີ 3

### ທຸງອາຊຽນ



ທຸງອາຊຽນສະແດງເຖິງອາຊຽນທີ່ມີສະຖຽນລະພາບ, ສັນຕິພາບ, ເອກະພາບ ແລະ ຄວາມເຂັ້ມແຂງ. ສີຂອງທຸງ - ຟ້າ, ແດງ, ຂາວ ແລະ ເຫລືອງ- ເປັນຕົວແທນຂອງບັນດາສີສຳຄັນໃນທຸງຊາດຂອງບັນດາປະເທດສະມາຊິກອາຊຽນ.

ສີຟ້າ ຫມາຍເຖິງສັນຕິພາບ ແລະ ສະຖຽນລະພາບ. ສີແດງ ຫມາຍເຖິງ ຄວາມກ້າຫານ ແລະ ຄວາມເຂັ້ມແຂງ. ສີຂາວ ສະແດງເຖິງ ຄວາມສະອາດລິດໃສ ແລະ ສີເຫລືອງ ແມ່ນສັນຍາລັກແຫ່ງຄວາມອຸດົມສົມບູນ.

ຮວງເຂົ້າແມ່ນ ສະແດງເຖິງຄວາມຝັນຂອງບັນພະບູລຸດຜູ້ສ້າງຕັ້ງອາຊຽນ ທີ່ປະກອບດ້ວຍບັນດາປະ-ເທດໃນອາຊີຕາເວັນອອກສ່ຽງໃຕ້ທີ່ຜູກພັນກັນ ດ້ວຍມິດຕະພາບ ແລະ ຄວາມສາມັກຄີ. ວົງກົມແມ່ນ ຫມາຍເຖິງຄວາມເປັນເອກະພາບຂອງອາຊຽນ.

ລາຍລະອຽດຂອງແຖບສີທຸງອາຊຽນ ທີ່ໄດ້ຮັບການຮັບຮອງສຳລັບສີຂອງທຸງອາຊຽນ ມີດັ່ງນີ້:
Blue: Pantone 19-4053 TC
Red: Pantone 18-1655 TC
White: Pantone 11-4202 TC
Yellow: Pantone 13-0758 TC

ສຳລັບສະບັບພິມ, ລາຍລະອຽດຂອງແຖບສີທຸງ (ຍົກເວັ້ນສີຂາວ) ຕ້ອງສອດຄ່ອງກັບສີຂອງກາຫມາຍອາຊຽນ, ດັ່ງນີ້: Blue: Pantone 286 or Process Colour 100C 60M 0Y 6K
Red: Pantone Red 032 or Process Colour 0C 91M 87Y 0K
Yellow: Pantone Process Yellow or Process Colour 0C 0M 100Y 0K

ສັດສ່ວນຂອງຄວາມກວ້າງ ຕໍ່ ຄວາມຍາວຂອງທຸງແມ່ນ ສອງ ຕໍ່ ສາມ, ແລະ ລາຍລະອຽດ
ຂອງຂະໜານມີດັ່ງນີ້:

Table Flag: 10 cm x 15 cm
Room Flag: 100 cm x 150 cm
Car Flag: 10 cm x 30 cm
Field Flag: 200 cm x 300 cm

……………………………………..

## ເອກະສານຊ້ອນທ້າຍທີ 4

### ກາຫມາຍລັກອາຊຽນ

ກາຫມາຍອາຊຽນສະແດງເຖິງອາຊຽນທີ່ມີສະຖຽນລະພາບ, ສັນຕິພາບ, ເອກະພາບ ແລະ ຄວາມເຂັ້ມແຂງ. ສີຂອງທຸງ - ຟ້າ, ແດງ, ຂາວ ແລະ ເຫລືອງ- ເປັນຕົວແທນຂອງບັນດາສີສຳຄັນໃນທຸງຊາດຂອງບັນດາປະເທດສະມາຊິກອາຊຽນ.

ສີຟ້າ ຫມາຍເຖິງສັນຕິພາບ ແລະ ສະຖຽນລະພາບ. ສີແດງ ຫມາຍເຖິງ ຄວາມກ້າຫານ ແລະ ຄວາມເຂັ້ມແຂງ. ສີຂາວ ສະແດງເຖິງ ຄວາມສະອາດສົດໃສ ແລະ ສີເຫລືອງ ແມ່ນສັນຍາລັກແຫ່ງຄວາມອຸດົມສົມບູນ.

ຮວງເຂົ້າແມ່ນ ສະແດງເຖິງຄວາມຝັນຂອງບັນພະບູລຸດຜູ້ສ້າງຕັ້ງອາຊຽນ ທີ່ປະກອບດ້ວຍບັນດາປະ-ເທດໃນອາຊີຕາເວັນອອກສ່ຽງໃຕ້ທີ່ຜູກພັນກັນ ດ້ວຍມິດຕະພາບ ແລະ ຄວາມສາມັກຄີ. ວົງກົມແມ່ນຫມາຍເຖິງຄວາມເປັນເອກະພາບຂອງອາຊຽນ.

ລາຍລະອຽດຂອງແຖບສີກາຫມາຍອາຊຽນ ທີ່ໄດ້ຮັບການຮັບຮອງສຳລັບສີຂອງກາຫມາຍອາຊຽນ ມີດັ່ງນີ້:

Blue: Pantone 286
Red: Pantone Red 032
Yellow: Pantone Process Yellow

ສຳລັບການພິມ 4 ສີ, ລາຍລະອຽດຂອງສີມີດັ່ງນີ້:

Blue: 100C 60 M 0Y 6K (100C 60M 0Y 10K)
Red: 0C 91M 87Y 0K (0C 90M 90Y 0K)
Yellow: 0C 0M 100Y 0K
ລາຍລະອຽດໃນວົງເລັບແມ່ນໃຊ້ໃນກໍລະນີບໍ່ສາມາດວັດແທກສີໄດ້.

ການຈຳລອງແຖບສີ ມີລາຍລະອຽດ ດັ່ງນີ້:
Blue: Pantone 204-1
Red: Pantone 60-1
Yellow: Pantone 1-3

ແບບຕົວໜັງສືໃຊ້ສຳລັບຄຳວ່າ “ASEAN” ໃນກາໜມາຍແມ່ນ ຂຽນດ້ວຍແບບຕົວໜັງສື Helvetica ເປັນຕົວເຂັ້ມ ຢູ່ລຸ່ມຂອງຮວງເຂົ້າ.

. . ........................................... . .